ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 138 /ລບ
ນະຄອນຫຼວງວຽງຈັນ, ວັນທີ 02.03.2020

# ດຳລັດ
# ວ່າດ້ວຍວິສາຫະກິດຮັກສາຄວາມປອດໄພ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍ ວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ສະບັບເລກທີ 018/ສພຊ, ລົງວັນທີ 19 ທັນວາ 2013;
- ອີງຕາມ ໜັງສືສະເໜີ ຂອງກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 2518/ປກສ, ລົງວັນທີ 21 ພະຈິກ 2019.

## ລັດຖະບານ ອອກດຳລັດ:

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ການຕິດຕາມ ກວດກາ ວິສາຫະກິດຮັກສາຄວາມປອດໄພ ເພື່ອເຮັດໃຫ້ການຮັກສາຄວາມປອດໄພ ມີປະສິດທິພາບ, ປະສິດທິຜົນ ແນໃສ່ຮັກສາຄວາມສະຫງົບທາງດ້ານການເມືອງ ແລະ ຄວາມເປັນລະບຽບຮຽບຮ້ອຍທາງດ້ານສັງຄົມ ຮັບປະກັນ ສະຖຽນລະພາບ ແລະ ຄວາມໝັ້ນຄົງ ສາມາດເຊື່ອມໂຍງພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ວິສາຫະກິດຮັກສາຄວາມປອດໄພ**

ວິສາຫະກິດຮັກສາຄວາມປອດໄພ ແມ່ນປະເພດທຸລະກິດຄວບຄຸມ, ເປັນການຈັດຕັ້ງທຸລະກິດໜຶ່ງ ມີຖານະເປັນນິຕິບຸກຄົນ ທີ່ເຮັດໜ້າທີ່ ໃຫ້ການບໍລິການຮັກສາຄວາມປອດໄພ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ປະເພດທຸລະກິດຄວບຄຸມ** ໝາຍເຖິງ ປະເພດທຸລະກິດ ທີ່ມີຄວາມອ່ອນໄຫວສູງ ເປັນຕົ້ນ ຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຮີດຄອງປະເພນີອັນດີງາມຂອງຊາດ ແລະ ສິ່ງແວດລ້ອມ ຊຶ່ງຈຳເປັນຕ້ອງໄດ້ຮັບການພິຈາລະນາກວດຜ່ານ ຈາກຂະແໜງການທີ່ກ່ຽວຂ້ອງ ກ່ອນການຂຶ້ນທະບຽນວິສາຫະກິດ;

2. **ການບໍລິຫານຈັດການກຳລັງຮັກສາຄວາມປອດໄພ** ໝາຍເຖິງ ການຈັດຕັ້ງ, ນຳພາ, ຄຸ້ມຄອງ, ຕິດຕາມ ແລະ ກວດກາ ກຳລັງຮັກສາຄວາມປອດໄພ ເຄື່ອນໄຫວວຽກງານໃຫ້ບໍລິການ ຢ່າງມີປະສິດທິຜົນ;

3. **ອຸປະກອນຊ່ວຍໜູນກຳລັງຮັກສາຄວາມປອດໄພ** ໝາຍເຖິງ ເຄື່ອງມື ແລະ ວັດຖຸປະກອນ ທີ່ປະກອບໃຫ້ກຳລັງຮັກສາຄວາມປອດໄພ ເປັນຕົ້ນ ວິທະຍຸສື່ສານ, ໄມ້ຄ້ອນ, ໄຟສາຍ, ກະແຈມື, ເຄື່ອງກວດຫາດແຕກມືຖື, ອາວຸດ ແລະ ອຸປະກອນອື່ນ.

4. **ວິຊາງົດງາມ** ໝາຍເຖິງ ຈັງຫວະການເຄົາລົບ, ການສວນສະໜາມ ແລະ ການຕັ້ງຮູບແຖວຕ່າງໆ ຂອງກຳລັງປ້ອງກັນຄວາມສະຫງົບ ເພື່ອສະແດງເຖິງຄວາມເຂັ້ມແຂງ ແລະ ຄວາມມີລະບຽບວິໄນ ໃນການປະຕິບັດໜ້າທີ່ ໃຫ້ມີຄວາມເປັນເອກະພາບ ສວຍງາມ ແລະ ທັນສະໄໝຮອບດ້ານ.

**ມາດຕາ 4 ຫຼັກການຈັດຕັ້ງ ແລະ ການເຄື່ອນໄຫວ**

ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງວິສາຫະກິດຮັກສາຄວາມປອດໄພ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ຢູ່ພາຍໃຕ້ການນຳພາ ຊີ້ນຳ, ເດັດຂາດ, ໂດຍກົງ ແລະ ຮອບດ້ານ ຂອງພັກປະຊາຊົນປະຕິວັດລາວ;

2. ເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;

3. ຢູ່ພາຍໃຕ້ການ ນຳພາ, ຊີ້ນຳ, ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ຝຶກອົບຮົມ ທາງດ້ານວຽກງານວິຊາສະເພາະ ໂດຍກະຊວງປ້ອງກັນຄວາມສະຫງົບ;

4. ປະຕິບັດໜ້າທີ່ ດ້ວຍຄວາມ ສັດຊື່, ໂປ່ງໃສ, ມີຄວາມຮັບຜິດຊອບ ແລະ ຮັບປະກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ໃນຂອບເຂດ ພື້ນຖານເສດຖະກິດ, ວັດທະນະທຳ-ສັງຄົມ ໃນຂົງເຂດທີ່ຕົນຮັບຜິດຊອບ;

5. ລວມສູນເປັນເອກະພາບ, ມີລະບົບການຈັດຕັ້ງ ແລະ ການເຄື່ອນໄຫວ ເປັນລະບົບຄົບຊຸດ, ແບ່ງຂັ້ນຄຸ້ມຄອງ, ແບ່ງຄວາມຮັບຜິດຊອບ, ມີການພົວພັນປະສານສົມທົບ ຢ່າງກົມກຽວໃນຂອບເຂດທົ່ວປະເທດ.

**ມາດຕາ 5 ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ນຳໃຊ້ສຳລັບ ວິສາຫະກິດຮັກສາຄວາມປອດໄພທຸກຮູບແບບ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວ ຢູ່ ສປປ ລາວ ລວມທັງກຳລັງຮັກສາຄວາມປອດໄພ ໃນຂອບເຂດທົ່ວປະເທດ.

# ພາກທີ II

# ວິສາຫະກິດຮັກສາຄວາມປອດໄພ

## ໝວດທີ 1

## ການສ້າງຕັ້ງວິສາຫະກິດຮັກສາຄວາມປອດໄພ

**ມາດຕາ 6 ຂັ້ນຕອນການສ້າງຕັ້ງວິສາຫະກິດຮັກສາຄວາມປອດໄພ**

ການສ້າງຕັ້ງວິສາຫະກິດຮັກສາຄວາມປອດໄພ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຜູ້ປະກອບການ ທີ່ມີຈຸດປະສົງສ້າງຕັ້ງວິສາຫະກິດຮັກສາຄວາມປອດໄພ ຕ້ອງປະກອບເອກະສານຕາມແບບພິມ ທີ່ຫ້ອງການບໍລິການ ການລົງທຶນປະຕູດຽວຂັ້ນສູນກາງກຳນົດ ແລ້ວຍື່ນຕໍ່ ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນແຂວງ ເພື່ອພິຈາລະນາຢັ້ງຢືນພາຍໃນກຳນົດ ສິບຫ້າວັນ ຈາກນັ້ນ ໃຫ້ຍື່ນຕໍ່ຫ້ອງການບໍລິການການລົງທຶນປະຕູດຽວ ຂັ້ນສູນກາງ ເພື່ອຂໍໃບອະນຸຍາດລົງທຶນ, ໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳ ເນີນທຸລະກິດ;

2. ຫຼັງຈາກຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ໄດ້ຮັບເອກະສານແລ້ວ ໃຫ້ສະເໜີຕໍ່ ກະຊວງປ້ອງກັນຄວາມສະຫງົບ ເພື່ອພິຈາລະນາມີຄຳເຫັນ ແລະ ແຈ້ງຕອບຄືນ ຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນກົດໝາຍ;

3. ຫຼັງຈາກໄດ້ຮັບອະນຸຍາດການລົງທຶນ ຈາກຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ແລະ ໃບທະບຽນວິສາຫະກິດ ຈາກກະຊວງອຸດສາຫະກຳ ແລະ ການຄ້າແລ້ວ ກະຊວງປ້ອງກັນຄວາມສະຫງົບ ຈຶ່ງອອກໃບອະນຸຍາດດຳເນີນທຸລະກິດຮັກສາຄວາມປອດໄພໃຫ້.

ການໃສ່ຊື່ວິສາຫະກິດ ຂອງທຸກຫົວໜ່ວຍທຸລະກິດຕ້ອງລົງທ້າຍດ້ວຍ "**ຮັກສາຄວາມປອດໄພ**";

4. ຫຼັງຈາກ ໄດ້ຮັບການຕົກລົງອະນຸຍາດດຳເນີນທຸລະກິດບໍລິການຮັກສາຄວາມປອດໄພ ກະຊວງປ້ອງກັນຄວາມສະຫງົບ ຕ້ອງເຮັດສະໂນດນຳສົ່ງເອກະສານສະບັບຕົ້ນຢ່າງລະໜຶ່ງສະບັບ ໃຫ້ເຈົ້າໜ້າທີ່ທະບຽນ ທີ່ອອກໃບທະບຽນວິສາຫະກິດ.

**ມາດຕາ 7 ເງື່ອນໄຂ ໃນການຂໍອະນຸຍາດສ້າງຕັ້ງ ວິສາຫະກິດຮັກສາຄວາມປອດໄພ**

ເງື່ອນໄຂ ໃນການຂໍອະນຸຍາດສ້າງຕັ້ງ ວິສາຫະກິດຮັກສາຄວາມປອດໄພ ມີ ດັ່ງນີ້:

1. ມີທຶນຈົດທະບຽນຕ່ຳສຸດ ໜຶ່ງພັນລ້ານກີບ ແລະ ໃຫ້ມີບັນຊີເງິນສົດຝາກຢູ່ທະນາຄານ ຫ້າຮ້ອຍລ້ານກີບຂຶ້ນໄປ ເພື່ອຄ້ຳປະກັນການຊຳລະສະສາງກັບລູກຄ້າ ເມື່ອມີຜົນເສຍຫາຍເກີດຂຶ້ນທີ່ນອນຢູ່ໃນຂໍ້ຜູກພັນສັນຍາ;

2. ຕ້ອງແມ່ນຄົນລາວໂດຍກຳເນີດ ແລະ ຖືຮຸ້ນຢ່າງໜ້ອຍ ຫ້າສິບເອັດສ່ວນຮ້ອຍ ຂອງທຶນຈົດທະບຽນໃນກໍລະນີຮ່ວມທຶນກັບຕ່າງປະເທດ;

3. ຜູ້ອຳນວຍການໃຫຍ່ ຫຼື ປະທານສະພາບໍລິຫານ ຕ້ອງແມ່ນຄົນສັນຊາດລາວໂດຍກຳເນີດ;

4. ຕ້ອງມີ ສະຖານທີ່ຕັ້ງຫ້ອງການ, ຫໍພັກ ໃຫ້ກຳລັງຮັກສາຄວາມປອດໄພ ແລະ ຖ້າມີສູນຝຶກອົບຮົມຕ້ອງມີກຳລັງຮັກສາຄວາມປອດໄພແຕ່ ສອງຮ້ອຍຄົນ ຂຶ້ນໄປ;

5. ຕ້ອງມີສູນວິທະຍຸຕິດຕໍ່ສື່ສານ ໂດຍໄດ້ຮັບອະນຸຍາດ ຈາກຂະແໜງການທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ (ສຳລັບການສ້າງຕັ້ງສູນວິທະຍຸຕິດຕໍ່ສື່ສານ ຕ້ອງສະເໜີພ້ອມກັບການສ້າງຕັ້ງວິສາຫະກິດຮັກສາຄວາມປອດໄພ);

6. ຕ້ອງມີພາຫະນະຮັບໃຊ້ ເຊັ່ນ ລົດຂົນສົ່ງກຳລັງ, ລົດສາຍກວດ ແລະ ອຸປະກອນຊ່ວຍໜູນ ກຳລັງຮັກສາຄວາມປອດໄພ;

7. ວິສາຫະກິດຮັກສາຄວາມປອດໄພ ຢູ່ ຂັ້ນແຂວງ ແມ່ນອະນຸຍາດໃຫ້ມີແຕ່ ສາມວິສາຫະກິດເທົ່ານັ້ນ ຕໍ່ໜຶ່ງແຂວງ ຫຼື ນະຄອນຫຼວງ;

8. ການສະເໜີຂໍອະນຸຍາດດຳເນີນທຸລະກິດຮັກສາຄວາມປອດໄພ ທີ່ບໍ່ໄດ້ຮຸ້ນສ່ວນ ກັບ ຂະແໜງປ້ອງກັນຄວາມສະຫງົບ ຕ້ອງມີທີ່ປຶກສາເປັນນາຍຕຳຫຼວດປະຈຳການ ຢູ່ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ບ່ອນສະເໜີດຳເນີນທຸລະກິດນັ້ນ.

**ມາດຕາ 8 ເງື່ອນໄຂການຮ່ວມທຶນຂອງຕ່າງປະເທດ**

ສຳລັບ ຜູ້ລົງທຶນຕ່າງປະເທດ ທີ່ຈະມາຮ່ວມທຶນກັບວິສາຫະກິດຮັກສາຄວາມປອດໄພຂອງ ສປປ ລາວ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີຖານະນິຕິບຸກຄົນ;
2. ມີປະສົບການ ໃນການດຳເນີນທຸລະກິດຮັກສາຄວາມປອດໄພມາແລ້ວ ຕໍ່າສຸດ ສິບປີ;
3. ມີຖານະຄວາມໝັ້ນຄົງທາງດ້ານການເງິນ;
4. ຖືຮຸ້ນໄດ້ສູງສຸດ ສີ່ສິບເກົ້າສ່ວນຮ້ອຍ ເພື່ອສະໜອງເຂົ້າໃນການຊື້ ພາຫະນະ, ວັດຖຸປະກອນ, ເຄື່ອງເຕັກໂນໂລຊີ, ພັດທະນາບຸກຄະລາກອນຮັກສາຄວາມປອດໄພ ແລະ ປັບປຸງໂຄງລ່າງພື້ນຖານ ຂອງວິສາຫະກິດຮັກສາຄວາມປອດໄພ.

**ມາດຕາ 9 ມາດຕະຖານ ແລະ ເງື່ອນໄຂ ຂອງຜູ້ສ້າງຕັ້ງວິສາຫະກິດຮັກສາຄວາມປອດໄພ**

ມາດຕະຖານ ແລະ ເງື່ອນໄຂ ຂອງຜູ້ສ້າງຕັ້ງວິສາຫະກິດຮັກສາຄວາມປອດໄພ ມີດັ່ງນີ້:

1. ຕ້ອງແມ່ນຄົນລາວໂດຍກຳເນີດ ແລະ ມີທີ່ຢູ່ຖາວອນໃນ ສປປ ລາວ;
2. ບໍ່ເຄີຍຖືກສານຕັດສິນລົງໂທດ ໃນສະຖານການກະທຳຜິດ ໂດຍເຈດຕະນາ;
3. ບໍ່ມີປະຫວັດການພົວພັນເຖິງບັນຫາຄວາມໝັ້ນຄົງຂອງຊາດ;
4. ຕ້ອງແມ່ນຜູ້ທີ່ມີປະຫວັດຢ່າງຈະແຈ້ງ;
5. ຕ້ອງເປັນຜູ້ທີ່ມີທຶນ ຈາກແຫຼ່ງທຶນທີ່ຖືກຕ້ອງ ແລະ ທຶນດັ່ງກ່າວ ຕ້ອງມີບັນຊີເງິນຝາກໃນທະນາຄານຂອງ ສປປ ລາວ ຕາມມາດຕະຖານ ແລະ ເງື່ອນໄຂ ທີ່ໄດ້ກຳນົດໄວ້;
6. ບໍ່ເຄີຍຖືກຖອນ ໃບອະນຸຍາດດຳເນີນທຸລະກິດຮັກສາຄວາມປອດໄພ ມາກ່ອນ;
7. ສຳລັບບຸກຄົນ ຕ້ອງມີວຸດທິການສຶກສາ ແຕ່ຊັ້ນກາງຂຶ້ນໄປ ຖ້າຈົບຈາກສະຖາບັນການສຶກສາ ຂອງກຳລັງປ້ອງກັນຄວາມສະຫງົບ ຫຼື ກຳລັງປ້ອງກັນຊາດ ທັງພາຍໃນ ແລະ ຕ່າງປະເທດ. ໃນກໍລະນີຈົບຈາກສະຖາບັນການສຶກສາຂະແໜງການອື່ນ ຕ້ອງມີວຸດທິການສຶກສາແຕ່ອະນຸປະລິນຍາຕີຂຶ້ນໄປ;
8. ສຳລັບນິຕິບຸກຄົນ ຜູ້ທີ່ເປັນເຈົ້າຂອງວິສາຫະກິດ ຕ້ອງມີມາດຕະຖານ ແລະ ເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ທີ 1, 2, 3, 4, 6 ແລະ 7 ຂອງມາດຕາ.

## ໝວດທີ 2
## ການສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພ

**ມາດຕາ 10 ສາຂາວິສາຫະກິດ**

ສາຂາວິສາຫະກິດຮັກສາຄວາມປອດໄພ ແມ່ນສ່ວນໜຶ່ງໃນໂຄງປະກອບທຸລະກິດ ຂອງວິສາຫະກິດຮັກສາຄວາມປອດໄພ ແລະ ໄດ້ຮັບການສ້າງຕັ້ງຕາມມະຕິຂອງວິສາຫະກິດຮັກສາຄວາມປອດໄພນັ້ນ.

ສາຂາວິສາຫະກິດຮັກສາຄວາມປອດໄພ ບໍ່ມີຖານະເປັນນິຕິບຸກຄົນ ແຍກອອກຕ່າງຫາກຈາກວິສາຫະກິດທີ່ສ້າງຕັ້ງສາຂານັ້ນ.

**ວິສາຫະກິດຮັກສາຄວາມປອດໄພທີ່ສ້າງຕັ້ງສາຂາ ຕ້ອງຮັບຜິດຊອບຕໍ່ທຸກການກະທຳ ຂອງສາຂາຂອງຕົນ ຄືກັບການກະທຳຂອງຕົນເອງ, ການຮ້ອງຟ້ອງສາຂາຂອງນິຕິບຸກຄົນພາຍໃນ ໃຫ້ຖືວ່າເປັນການຮ້ອງຟ້ອງ ນິຕິບຸກຄົນນັ້ນ ເວັ້ນເສຍແຕ່ການກະທຳ ທີ່ກົດໝາຍ ແລະ ລະບຽບການກຳນົດເປັນຢ່າງອື່ນ.**

**ມາດຕາ 11 ຂັ້ນຕອນການສ້າງຕັ້ງ ສາຂາວິສາຫະກິດຮັກສາຄວາມປອດໄພ**

ວິສາຫະກິດ ຕ້ອງປະກອບເອກະສານຍື່ນຕໍ່ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ບ່ອນທີ່ຈະສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພ.

ພາຍຫຼັງ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ໄດ້ຕົກລົງເຫັນດີ ຈຶ່ງສະເໜີມາຍັງ ກະຊວງປ້ອງກັນຄວາມສະຫງົບ ພິຈາລະນາອອກຂໍ້ຕົກລົງອະນຸມັດສ້າງຕັ້ງ ແລ້ວຈຶ່ງແຈ້ງໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດບ່ອນທີ່ສາຂາວິສາຫະກິດຕັ້ງຢູ່ຊາບ ເພື່ອລົງທະບຽນຄຸ້ມຄອງ ແລະ ຕິດຕາມ ຕາມລະບຽບການ.

**ມາດຕາ 12 ເງື່ອນໄຂ ການຂໍສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພ**

ເງື່ອນໄຂ ການຂໍສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພ ມີດັ່ງນີ້:

1. ເປັນວິສາຫະກິດ ທີ່ໄດ້ຈົດທະບຽນສ້າງຕັ້ງວິສາຫະກິດ ແລະ ໄດ້ຮັບອະນຸຍາດດຳເນີນທຸລະກິດ ຮັກສາຄວາມປອດໄພ ຢ່າງຖືກຕ້ອງຕາມກົດໝາຍ ຢູ່ ສປປ ລາວ;
2. ມີຫົວໜ້າສາຂາວິສາຫະກິດຮັກສາຄວາມປອດໄພ ເປັນພົນລະເມືອງລາວ ແລະ ປະຕິບັດຕາມມາດຕະຖານ ແລະ ເງື່ອນໄຂ ທີ່ໄດ້ກຳນົດໄວ້ ໃນຂໍ້ 1, 2, 3, 4, 6 ແລະ 7 ຂອງມາດຕາ 9 ດຳລັດສະບັບນີ້;
3. ຕ້ອງມີລູກຄ້າທີ່ໃຊ້ບໍລິການຢູ່ສະຖານທີ່ສະເໜີສ້າງຕັ້ງສາຂາ ຕໍ່າສຸດມີ ສາມ ຫົວໜ່ວຍບໍລິການ ແລະ ມີກຳລັງຮັກສາຄວາມປອດໄພແຕ່ ຊາວຄົນ ຂຶ້ນໄປ;
4. ຕ້ອງມີ ສະຖານທີ່, ຫ້ອງການ ຂອງສາຂາວິສາຫະກິດທີ່ແນ່ນອນ;
5. ຕ້ອງມີສູນວິທະຍຸຕິດຕໍ່ສື່ສານ ໂດຍໄດ້ຮັບອະນຸຍາດ ຈາກຂະແໜງການທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ (ສຳລັບການສ້າງຕັ້ງສູນວິທະຍຸຕິດຕໍ່ສື່ສານ ຕ້ອງສະເໜີພ້ອມກັບການສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພ);
6. ຕ້ອງມີພາຫະນະຮັບໃຊ້ ເຊັ່ນ ລົດຮັບສົ່ງ, ລົດສາຍກວດ ແລະ ອຸປະກອນຊ່ວຍໜູນ ກຳລັງຮັກສາຄວາມປອດໄພ;
7. ການເຄື່ອນໄຫວຂອງສາຂາ ຕ້ອງຢູ່ໃນຂອບເຂດ ສິດ ແລະ ໜ້າທີ່ ວິສາຫະກິດມອບໝາຍໃຫ້ເປັນລາຍລັກອັກສອນ.

## ໝວດທີ 3
## ການປະກອບເອກະສານ, ຂັ້ນຕອນການພິຈາລະນາອະນຸຍາດດຳເນີນທຸລະກິດ ແລະ ສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພ

**ມາດຕາ 13 ການປະກອບເອກະສານ ຂໍອະນຸຍາດດຳເນີນທຸລະກິດຮັກສາຄວາມປອດໄພ**

ການປະກອບເອກະສານ ຂໍອະນຸຍາດດຳເນີນທຸລະກິດຮັກສາຄວາມປອດໄພ ມີດັ່ງນີ້:

1. ໜັງສືຂໍອະນຸຍາດດຳເນີນທຸລະກິດຮັກສາຄວາມປອດໄພ;
2. ໃບທະບຽນສ້າງຕັ້ງວິສາຫະກິດ;
3. ໃບອະນຸຍາດການລົງທຶນ;
4. ໃບຢັ້ງຢືນຖານະຄວາມໝັ້ນຄົງທາງດ້ານການເງິນ;
5. ສຳເນົາບັດປະຈຳຕົວ, ສຳເນົາປຶ້ມສຳມະໂນຄົວ ຢ່າງລະ ໜຶ່ງສະບັບ;
6. ໃບປະກາສະນິຍະບັດ;
7. ບົດວິພາກເສດຖະກິດ;
8. ແຜນທີ່ ທີ່ຕັ້ງ ສຳນັກງານວິສາຫະກິດ;
9. ເອກະສານ ຢັ້ງຢືນສະແດງຄວາມເປັນເຈົ້າຂອງ ອາຄານ ຫຼື ສະຖານທີ່ ໃຊ້ເປັນສະຖານປະກອບການທຸລະກິດຮັກສາຄວາມປອດໄພ ໃນກໍລະນີ ສະຖານທີ່ເປັນຂອງບຸກຄົນອື່ນ ຕ້ອງມີໃບມອບສິດນຳໃຊ້ ຫຼື ສັນຍາເຊົ່າຈາກເຈົ້າຂອງສະຖານທີ່;
10. ຮູບຖ່າຍ ຂະໜາດ 4x6 ຈຳນວນ ສາມໃບ ບໍ່ເກີນ ສາມເດືອນ;
11. ບັນຊີລາຍຊື່, ສຳເນົາບັດປະຈຳຕົວ ຂອງຄະນະກຳມະການ ຫຼື ຜູ້ຖືຮຸ້ນ ວິສາຫະກິດຮັກສາຄວາມປອດໄພຢ່າງລະໜຶ່ງສະບັບ.

ຖ້າເປັນຄົນຕ່າງປະເທດ ຕ້ອງມີໜັງສືຜ່ານແດນ ແລະ ວີຊາທຸລະກິດ (ປະເພດ NI-B2 ຫຼື I-B2);

12. ສັນຍາຮ່ວມທຸລະກິດ (ກໍລະນີຫາກເປັນ ທຸລະກິດຮຸ້ນສ່ວນ);
13. ກົດລະບຽບຂອງວິສາຫະກິດຮັກສາຄວາມປອດໄພ;
14. ໃບຢັ້ງຢືນຖານະການເງິນ ຈາກທະນາຄານ;
15. ໃບແຈ້ງໂທດບໍ່ເກີນ ສາມເດືອນ ສະເພາະຄົນຕ່າງປະເທດ ຕ້ອງມີໃບແຈ້ງໂທດ ຂອງປະເທດຕົນ;
16. ໃບຊີວະປະຫວັດຈະແຈ້ງ ໂດຍຜ່ານການຢັ້ງຢືນຈາກ ປ້ອງກັນຄວາມສະຫງົບກຸ່ມບ້ານ, ປ້ອງກັນຄວາມສະຫງົບ ຂັ້ນເມືອງ ແລະ ປ້ອງກັນຄວາມສະຫງົບ ຂັ້ນແຂວງ; ສຳລັບຄົນຕ່າງປະເທດຕ້ອງໄດ້ຮັບການຢັ້ງຢືນຊີວະປະຫວັດ ຈາກສະຖານທູດ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຂອງປະເທດນັ້ນ;
17. ໜັງສືສະເໜີຂໍອະນຸຍາດນຳໃຊ້ ຊື່, ເຄື່ອງແບບ ແລະ ເຄື່ອງໝາຍ ຂອງວິສາຫະກິດຮັກສາຄວາມປອດໄພ.

ສຳລັບ ກິງຈັກການຈັດຕັ້ງ ແລະ ບຸກຄະລາກອນ ຂອງວິສາຫະກິດຮັກສາຄວາມປອດໄພ ແມ່ນໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 14 ການປະກອບເອກະສານ ຂໍອະນຸຍາດສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພ**

ການປະກອບເອກະສານ ຂໍອະນຸຍາດສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພ ມີດັ່ງນີ້:

1. ໜັງສືຂໍອະນຸຍາດສ້າງຕັ້ງ ສາຂາວິສາຫະກິດ ຂອງວິສາຫະກິດ;
2. ສຳເນົາ ມະຕິຕົກລົງເຫັນດີ ສ້າງຕັ້ງສາຂາ ຂອງວິສາຫະກິດ;
3. ສຳເນົາ ໃບອະນຸຍາດດຳເນີນທຸລະກິດ ຂອງວິສາຫະກິດ;
4. ສຳເນົາ ບັດປະຈຳຕົວ, ປຶ້ມສຳມະໂນຄົວ ຂອງຜູ້ຈັດການສາຂາວິສາຫະກິດຮັກສາຄວາມປອດໄພ;
5. ສຳເນົາ ໃບທະບຽນວິສາຫະກິດ ແລະ ກົດລະບຽບ ຂອງວິສາຫະກິດ;
6. ສຳເນົາ ໃບປະກາສະນີຍະບັດ ຂອງຜູ້ຈັດການສາຂາວິສາຫະກິດ;
7. ແຜນທີ່ ທີ່ຕັ້ງ ສຳນັກງານສາຂາວິສາຫະກິດ;
8. ເອກະສານຢັ້ງຢືນ ສະແດງຄວາມເປັນເຈົ້າຂອງ ອາຄານ ຫຼື ສະຖານທີ່ ໃຊ້ເປັນສະຖານປະກອບການທຸລະກິດຮັກສາຄວາມປອດໄພ.

ກໍລະນີ ສະຖານທີ່ ເປັນຂອງບຸກຄົນອື່ນ ຕ້ອງມີ ໃບມອບສິດນຳໃຊ້ ຫຼື ສັນຍາເຊົ່າ ຈາກເຈົ້າຂອງສະຖານທີ່;

9. ຮູບຖ່າຍ ຂະໜາດ 4x6 ຈຳນວນ ສາມໃບ ບໍ່ເກີນສາມເດືອນ;
10. ບັນຊີລາຍຊື່, ສຳເນົາບັດປະຈຳຕົວ ຂອງຄະນະກຳມະການສາຂາວິສາຫະກິດຮັກສາຄວາມປອດໄພ ຢ່າງລະໜຶ່ງສະບັບ.

ຖ້າເປັນຄົນຕ່າງປະເທດ ຕ້ອງມີໜັງສືຜ່ານແດນ ແລະ ວີຊາທຸລະກິດ (ປະເພດ NI-B2 ຫຼື I-B2);

11. ໃບມອບສິດ ແລະ ຄວາມຮັບຜິດຊອບ ຈາກວິສາຫະກິດ ໃຫ້ສາຂາ;
12. ໃບແຈ້ງໂທດບໍ່ເກີນ ສາມເດືອນ ສະເພາະຄົນຕ່າງປະເທດ ຕ້ອງມີໃບແຈ້ງໂທດ ຂອງປະເທດຕົນ;
13. ໃບຊີວະປະຫວັດຈະແຈ້ງ ໂດຍຜ່ານການຢັ້ງຢືນຈາກ ປ້ອງກັນຄວາມສະຫງົບກຸ່ມບ້ານ, ປ້ອງກັນຄວາມສະຫງົບ ຂັ້ນເມືອງ ແລະ ປ້ອງກັນຄວາມສະຫງົບ ຂັ້ນແຂວງ; ສຳລັບຄົນຕ່າງປະເທດຕ້ອງໄດ້ຮັບການຢັ້ງ ຢືນຊີວະປະຫວັດ ຈາກສະຖານທູດ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຂອງປະເທດນັ້ນ;
14. ຕ້ອງມີ ສຳເນົາສັນຍາລູກຄ້າທີ່ໃຊ້ບໍລິການຢູ່ສະຖານທີ່ສະເໜີສ້າງຕັ້ງສາຂາ ຕໍ່າສຸດມີ ສາມຫົວໜ່ວຍບໍລິການ ແລະ ໃບແຈ້ງຈຳນວນພົນ ກຳລັງຮັກສາຄວາມປອດໄພແຕ່ ຊາວຄົນ ຂຶ້ນໄປ.

ສຳລັບ ກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ ຂອງສາຂາວິສາຫະກິດຮັກສາຄວາມປອດໄພ ແມ່ນໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 15 ກຳນົດເວລາການພິຈາລະນາອອກໃບອະນຸຍາດ ດຳເນີນທຸລະກິດ ແລະ ສ້າງຕັ້ງສາຂາວິສາຫະກິດ ຮັກສາຄວາມປອດໄພ**

ກຳນົດເວລາການພິຈາລະນາອອກໃບອະນຸຍາດ ດຳເນີນທຸລະກິດ ແລະ ສ້າງຕັ້ງສາຂາວິສາຫະກິດ ຮັກສາຄວາມປອດໄພ ມີ ດັ່ງນີ້:

1. ກະຊວງປ້ອງກັນຄວາມສະຫງົບ ພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດຮັກສາຄວາມປອດໄພ ພາຍໃນກຳນົດ ແປດວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານ ຈາກຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ.
2. ກຳນົດເວລາ ການພິຈາລະນາອອກໃບອະນຸຍາດສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພ:

- ຫຼັງຈາກ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ໄດ້ຮັບເອກະສານຂໍອະນຸຍາດສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພ ຈາກຜູ້ປະກອບການ ຕ້ອງຄົ້ນຄວ້າ ແລະ ມີຄໍາເຫັນ ພາຍໃນກໍານົດ ຫ້າວັນລັດຖະການ, ເມື່ອຄົບກໍານົດ ຫ້າວັນລັດຖະການ ຫາກບໍ່ສາມາດມີຄໍາເຫັນ ຕ້ອງແຈ້ງໃຫ້ຜູ້ປະກອບການຮັບຊາບເຫດຜົນ ພາຍໃນກໍານົດ ສອງວັນລັດຖະການ;

- ຫຼັງຈາກ ກະຊວງປ້ອງກັນຄວາມສະຫງົບ ໄດ້ຮັບເອກະສານຢັ້ງຢືນເຫັນດີ ກ່ຽວກັບ ການສະເໜີສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພ ຈາກກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງແລ້ວ ຕ້ອງຄົ້ນຄວ້າພິຈາລະນາຕົກລົງ ພາຍໃນກໍານົດ ຫ້າວັນລັດຖະການ, ໃນກໍລະນີ ທີ່ບໍ່ເຫັນດີ ຕ້ອງແຈ້ງໃຫ້ຜູ້ປະກອບການຮັບຊາບເຫດຜົນ ພາຍໃນກໍານົດ ສອງວັນລັດຖະການ.

**ມາດຕາ 16 ຜູ້ມີສິດອະນຸຍາດດໍາເນີນທຸລະກິດຮັກສາຄວາມປອດໄພ**

ຜູ້ມີສິດຕົກລົງອະນຸຍາດດໍາເນີນທຸລະກິດຮັກສາຄວາມປອດໄພ ມີດັ່ງນີ້:

1. ລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຕົກລົງອະນຸຍາດດໍາເນີນທຸລະກິດຮັກສາຄວາມປອດໄພ ຕາມການສະເໜີ ຂອງອົງການຄຸ້ມຄອງວຽກງານວິສາຫະກິດຮັກສາຄວາມປອດໄພ ຂອງກະຊວງປ້ອງກັນຄວາມສະຫງົບ ພາຍຫຼັງໄດ້ຮັບອະນຸຍາດການລົງທຶນ;
2. ຫົວໜ້າກົມໃຫຍ່ພະລາທິການ ປ້ອງກັນຄວາມສະຫງົບ ເປັນຜູ້ຕົກລົງອະນຸຍາດສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພ ຕາມການສະເໜີ ຂອງຂະແໜງການຄຸ້ມຄອງວຽກງານວິສາຫະກິດຮັກສາຄວາມປອດໄພ ຂອງກົມໃຫຍ່ພະລາທິການ ປ້ອງກັນຄວາມສະຫງົບ.

ສໍາລັບ ໃບອະນຸຍາດດໍາເນີນທຸລະກິດຮັກສາຄວາມປອດໄພ ແລະ ສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພ ມີອາຍຸນໍາໃຊ້ ສາມປີ, ຖ້າໝົດກໍານົດ ຕ້ອງຂໍຕໍ່ອາຍຸ ຕາມລະບຽບການ.

## ໝວດທີ 4
## ການຕໍ່ອາຍຸ, ການໂຈະ ແລະ ການຖອນ ໃບອະນຸຍາດດໍາເນີນທຸລະກິດຮັກສາຄວາມປອດໄພ ແລະ ສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພ

**ມາດຕາ 17 ການຕໍ່ອາຍຸໃບອະນຸຍາດດໍາເນີນທຸລະກິດຮັກສາຄວາມປອດໄພ**

ໃບອະນຸຍາດ ດໍາເນີນທຸລະກິດຮັກສາຄວາມປອດໄພ ມີອາຍຸການ ສາມປີ ຖ້າໝົດກໍານົດເວລາ ຕ້ອງຂໍຕໍ່ອາຍຸດໍາເນີນທຸລະກິດຮັກສາຄວາມປອດໄພຄືນໃໝ່ ຕາມລະບຽບການ.

ສໍາລັບ ການປະກອບເອກະສານ ໃນການຂໍຕໍ່ໃບອະນຸຍາດດໍາເນີນທຸລະກິດຮັກສາຄວາມປອດໄພ ມີດັ່ງນີ້:

1. ໜັງສືສະເໜີ ຂໍຕໍ່ອາຍຸ ຈາກວິສາຫະກິດຮັກສາຄວາມປອດໄພ;
2. ໃບອາກອນທຸລະກິດ;
3. ໃບທະບຽນວິສາຫະກິດ;
4. ໃບອະນຸຍາດການລົງທຶນ;
5. ໃບອະນຸຍາດດໍາເນີນທຸລະກິດ;
6. ໃບແຈ້ງເສຍອາກອນທຸລະກິດ ປະຈໍາປີ;
7. ໃບແຈ້ງເສຍອາກອນລາຍໄດ້ ປະຈໍາປີ;

8. ໃບຢັ້ງຢືນປະກອບເງິນພັນທະເຂົ້າກອງທຶນກຳລັງຮັກສາຄວາມປອດໄພ ໃຫ້ກະຊວງປ້ອງກັນຄວາມສະຫງົບ ສູນຈຸດຫ້າສ່ວນຮ້ອຍ;

9. ໃບຢັ້ງຢືນເຮັດສັນຍາວ່າຈ້າງກັບລູກຄ້າ ໃນປະຈຸບັນ ລວມທັງສາຂາວິສາຫະກິດ;

10. ໃບແຈ້ງ ຈຳນວນພົນກຳລັງຮັກສາຄວາມປອດໄພ ໃນປະຈຸບັນ ລວມທັງສາຂາວິສາຫະກິດ;

11. ແຜນດຳເນີນທຸລະກິດ ໄລຍະ ສາມປີ ຕໍ່ໜ້າ;

12. ບັນຊີລາຍຊື່ສະມາຊິກສະພາບໍລິຫານ, ຄະນະອຳນວຍການ ແລະ ຜູ້ຈັດການ;

13. ບັນຊີລາຍຊື່ຂາຮຸ້ນ.

ສຳລັບການຕໍ່ອາຍຸ ການດຳເນີນທຸລະກິດຮັກສາຄວາມປອດໄພ ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ពິຈາລະນາອະນຸຍາດ.

## ມາດຕາ 18 ການໂຈະ ຫຼື ບໍ່ຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດຮັກສາຄວາມປອດໄພ

ໃບອະນຸຍາດດຳເນີນທຸລະກິດຮັກສາຄວາມປອດໄພ ຈະຖືກໂຈະ ຫຼື ບໍ່ຕໍ່ອາຍຸ ຍ້ອນສາເຫດ ດັ່ງນີ້:

1. ບໍ່ເສຍອາກອນທຸລະກິດ ປະຈຳປີ;
2. ບໍ່ເສຍອາກອນລາຍໄດ້ ປະຈຳປີ;
3. ບໍ່ເສຍພັນທະເຂົ້າກອງທຶນກຳລັງຮັກສາຄວາມປອດໄພ;
4. ບໍ່ຂໍອະນຸຍາດຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດຮັກສາຄວາມປອດໄພເກີນ ສາມເດືອນ;
5. ບໍ່ປະຕິບັດຕາມຄຳແນະນຳຂອງ ອົງການຄຸ້ມຄອງວຽກງານວິສາຫະກິດຮັກສາຄວາມປອດໄພ ຂອງກະຊວງປ້ອງກັນຄວາມສະຫງົບ ແລະ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ;
6. ບໍ່ປະຕິບັດຕາມ ມາດຕະຖານ, ເງື່ອນໄຂ, ພັນທະ, ຂໍ້ຫ້າມ ທີ່ກຳນົດໄວ້ໃນດຳລັດສະບັບນີ້ ແລະ ໄດ້ຖືກກ່າວເຕືອນຈາກອົງການຄຸ້ມຄອງ ແລະ ກວດກາຢ່າງເປັນລາຍລັກອັກສອນ ເຖິງ ສາມຄັ້ງ.

ຫຼັງຈາກ ມີຄຳສັ່ງໂຈະ ຫຼື ບໍ່ຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດຮັກສາຄວາມປອດໄພແລ້ວ ກະຊວງປ້ອງກັນຄວາມສະຫງົບ ຕ້ອງແຈ້ງໃຫ້ຂະແໜງການແຜນການ ແລະ ການລົງທຶນ ແລະ ເຈົ້າໜ້າທີ່ທະບຽນ ທີ່ອອກໃບທະບຽນວິສາຫະກິດຮັບຊາບ ພາຍໃນກຳນົດ ຫ້າວັນລັດຖະການ ນັບແຕ່ວັນເຊັນຄຳສັ່ງໂຈະ ຫຼື ບໍ່ຕໍ່ໃບອະນຸຍາດດຳເນີນທຸລະກິດຮັກສາຄວາມປອດໄພ. ການອອກຄຳສັ່ງໂຈະ ຫຼື ບໍ່ຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດຮັກສາຄວາມປອດໄພ ຕ້ອງເຮັດເປັນລາຍລັກອັກສອນ.

ລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ອອກຄຳສັ່ງໂຈະ ຫຼື ບໍ່ຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດຮັກສາຄວາມປອດໄພ.

ຫຼັງຈາກ ມີຄຳສັ່ງໂຈະ ຫຼື ບໍ່ຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດຮັກສາຄວາມປອດໄພ ພາຍໃນ ສາມເດືອນ, ວິສາຫະກິດຮັກສາຄວາມປອດໄພ ຫາກມີຈຸດປະສົງດຳເນີນທຸລະກິດຕໍ່ ກໍໃຫ້ປັບປຸງແກ້ໄຂ ຕາມເງື່ອນໄຂ ທີ່ແຈ້ງໃນຄຳສັ່ງໂຈະ ຫຼື ບໍ່ຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດຮັກສາຄວາມປອດໄພນັ້ນ ຖ້າບໍ່ປັບປຸງແກ້ໄຂ ກະຊວງປ້ອງກັນຄວາມສະຫງົບ ຈະອອກຄຳສັ່ງຖອນໃບອະນຸຍາດ ຢ່າງຖາວອນ.

## ມາດຕາ 19 ການຖອນ ໃບອະນຸຍາດດຳເນີນທຸລະກິດຮັກສາຄວາມປອດໄພ

ໃບອະນຸຍາດດຳເນີນທຸລະກິດຮັກສາຄວາມປອດໄພ ຈະຖືກຖອນ ຍ້ອນສາເຫດ ດັ່ງນີ້:

1. ບໍ່ປະຕິບັດຕາມຄຳສັ່ງໂຈະ ທີ່ກຳນົດໄວ້ໃນມາດຕາ 18 ຂອງດຳລັດສະບັບນີ້;

2. ຕາມການຕົກລົງເຫັນດີເປັນເອກະພາບກັນ ລະຫວ່າງ ຂາຮຸ້ນ ໃຫ້ຍຸບເລີກວິສາຫະກິດ;

3. ສານ ຕັດສິນໃຫ້ຍຸບເລີກວິສາຫະກິດ;

4. ການຍຸບເລີກວິສາຫາກິດ ດ້ວຍສາເຫດທາງດ້ານກົດໝາຍ;

5. ການຍຸບເລີກຊື່ວິສາຫະກິດ ຫຼື ບໍ່ໄດ້ປັບປຸງ ຕາມເງື່ອນໄຂ ທີ່ແຈ້ງໃນຄຳສັ່ງໂຈະ ຫຼື ບໍ່ຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດຮັກສາຄວາມປອດໄພ ພາຍໃນ ສາມເດືອນ;

6. ບໍ່ປະຕິບັດຕາມ ມາດຕະຖານ, ເງື່ອນໄຂ , ພັນທະ ແລະ ຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

ຫຼັງຈາກ ມີຄຳສັ່ງຖອນໃບອະນຸຍາດດຳເນີນທຸລະກິດຮັກສາຄວາມປອດໄພແລ້ວ ກະຊວງປ້ອງກັນຄວາມສະຫງົບ ຕ້ອງແຈ້ງໃຫ້ຂະແໜງການແຜນການ ແລະ ການລົງທຶນ ແລະ ເຈົ້າໜ້າທີ່ທະບຽນ ທີ່ອອກໃບທະບຽນວິສາຫະກິດ ພາຍໃນກຳນົດ ຫ້າວັນລັດຖະການ ນັບແຕ່ວັນເຊັນຄຳສັ່ງຖອນໃບອະນຸຍາດດຳເນີນທຸລະກິດ.

ອົງການອະນຸຍາດທີ່ກ່ຽວຂ້ອງ ຕ້ອງຖອນ ຫຼື ຍຸບເລີກ ໃບອະນຸຍາດການລົງທຶນ ແລະ ໃບທະບຽນວິສາຫະກິດ ພາຍໃນກຳນົດ ຫ້າວັນລັດຖະການ. ຄຳສັ່ງຖອນໃບອະນຸຍາດດຳເນີນທຸລະກິດຮັກສາຄວາມປອດໄພ ຕ້ອງເຮັດເປັນລາຍລັກອັກສອນ.

ລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ມີສິດອອກຄຳສັ່ງຖອນໃບອະນຸຍາດດຳເນີນທຸລະກິດຮັກສາຄວາມປອດໄພ.

**ມາດຕາ 20 ການຕໍ່ໃບອະນຸຍາດສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພ**

ໃບອະນຸຍາດສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພ ມີກຳນົດອາຍຸການ ສາມປີ ຖ້າໝົດກຳນົດເວລາ ຕ້ອງຂໍຕໍ່ໃບອະນຸຍາດສ້າງຕັ້ງສາຂາ ຄືນໃໝ່ ຕາມລະບຽບການ.

ສຳລັບ ການປະກອບເອກະສານ ໃນການຂໍຕໍ່ໃບອະນຸຍາດສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພ ມີດັ່ງນີ້:

1. ໜັງສືສະເໜີ ຂໍຕໍ່ອາຍຸ ຈາກວິສາຫະກິດ;
2. ໃບທະບຽນວິສາຫະກິດ;
3. ໃບອະນຸຍາດດຳເນີນທຸລະກິດຮັກສາຄວາມປອດໄພ;
4. ໃບຢັ້ງຢືນການລົງທະບຽນຄຸ້ມຄອງ ແລະ ຕິດຕາມ ຂອງເຈົ້າໜ້າທີ່ທະບຽນວິສາຫະກິດບ່ອນຕັ້ງສາຂາ;
5. ໃບອາກອນທຸລະກິດ ສາຂາວິສາຫະກິດ;
6. ໃບແຈ້ງເສຍອາກອນທຸລະກິດ ປະຈຳປີ ຂອງສາຂາວິສາຫະກິດ;
7. ໃບແຈ້ງເສຍອາກອນລາຍໄດ້ ປະຈຳປີ ຂອງສາຂາວິສາຫະກິດ;
8. ໃບຢັ້ງຢືນເຮັດສັນຍາວ່າຈ້າງກັບລູກຄ້າ ໃນປະຈຸບັນ ຂອງສາຂາວິສາຫະກິດ;
9. ໃບແຈ້ງ ຈຳນວນພົນກຳລັງຮັກສາຄວາມປອດໄພ ໃນປະຈຸບັນ ຂອງສາຂາວິສາຫະກິດ;
10. ບັນຊີລາຍຊື່ຄະນະຜູ້ຈັດການ ຂອງສາຂາວິສາຫະກິດ.

ຫົວໜ້າ ກົມໃຫຍ່ພະລາທິການ ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ມີສິດຕໍ່ກຳນົດອາຍຸໃບອະນຸຍາດສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພ.

**ມາດຕາ 21 ການໂຈະ ຫຼື ບໍ່ຕໍ່ອາຍຸໃບອະນຸຍາດສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພ**

ໃບອະນຸຍາດສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພ ຈະຖືກໂຈະ ຫຼື ບໍ່ຕໍ່ອາຍຸ ຍ້ອນສາເຫດ ດັ່ງນີ້:

1. ບໍ່ໄດ້ລົງທະບຽນຄຸ້ມຄອງ, ຕິດຕາມນຳເຈົ້າໜ້າທີ່ທະບຽນວິສາຫະກິດ ບ່ອນຕັ້ງສາຂາ;
2. ບໍ່ເສຍອາກອນທຸລະກິດປະຈຳປີ;
3. ບໍ່ເສຍອາກອນລາຍໄດ້ປະຈຳປີ;
4. ບໍ່ເສຍພັນທະເຂົ້າກອງທຶນກຳລັງຮັກສາຄວາມປອດໄພ;
5. ບໍ່ຂໍຕໍ່ກຳນົດອາຍຸໃບອະນຸຍາດສ້າງຕັ້ງ ສາຂາວິສາຫະກິດຮັກສາຄວາມປອດໄພເກີນ ສາມເດືອນ;
6. ບໍ່ປະຕິບັດຕາມຄຳແນະນຳຂອງອົງການຄຸ້ມຄອງວຽກງານວິສາຫະກິດຮັກສາຄວາມປອດໄພ ຂອງກະຊວງປ້ອງກັນຄວາມສະຫງົບ ແລະ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ;
7. ບໍ່ປະຕິບັດຕາມ ມາດຕະຖານ, ເງື່ອນໄຂ, ພັນທະ, ຂໍ້ຫ້າມ ທີ່ກຳນົດໄວ້ໃນດຳລັດສະບັບນີ້ ແລະ ໄດ້ຖືກກ່າວເຕືອນ ຈາກອົງການຄຸ້ມຄອງ ແລະ ກວດກາ ຢ່າງເປັນລາຍລັກອັກສອນ ເຖິງ ສາມຄັ້ງ.

ພາຍຫຼັງມີຄຳສັ່ງໂຈະ ຫຼື ບໍ່ຕໍ່ອາຍຸໃບອະນຸຍາດສ້າງຕັ້ງ ສາຂາວິສາຫະກິດຮັກສາຄວາມປອດໄພແລ້ວ ຂະແໜງການປ້ອງກັນຄວາມສະຫງົບທີ່ກ່ຽວຂ້ອງ ຕ້ອງແຈ້ງໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ບ່ອນສາຂາວິສາຫະກິດຕັ້ງຢູ່ຮັບຊາບ ພາຍໃນກຳນົດ ຫ້າວັນລັດຖະການ ນັບແຕ່ວັນເຊັນຄຳສັ່ງໂຈະ ຫຼື ບໍ່ຕໍ່ໃບອະນຸຍາດ ສ້າງຕັ້ງສາຂາວິສາຫະກິດ. ຄຳສັ່ງໂຈະ ຫຼື ບໍ່ຕໍ່ອາຍຸໃບອະນຸຍາດສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພ ຕ້ອງເຮັດເປັນລາຍລັກອັກສອນ.

ຫົວໜ້າກົມໃຫຍ່ພະລາທິການ ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ອອກຄຳສັ່ງໂຈະ ຫຼື ບໍ່ຕໍ່ອາຍຸໃບອະນຸຍາດສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພ.

ພາຍຫຼັງ ມີຄຳສັ່ງໂຈະ ຫຼື ບໍ່ຕໍ່ອາຍຸໃບອະນຸຍາດສ້າງຕັ້ງ ສາຂາວິສາຫະກິດຮັກສາຄວາມປອດໄພ ພາຍໃນ ສາມ ເດືອນ, ວິສາຫະກິດຮັກສາຄວາມປອດໄພ ຫາກມີຈຸດປະສົງດຳເນີນທຸລະກິດຕໍ່ ກໍໃຫ້ປັບປຸງແກ້ໄຂ ຕາມເງື່ອນໄຂ ທີ່ແຈ້ງໃນຄຳສັ່ງໂຈະ ຫຼື ບໍ່ຕໍ່ອາຍຸໃບອະນຸຍາດສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພນັ້ນ ຖ້າບໍ່ປັບປຸງແກ້ໄຂ ຕາມແຈ້ງການໂຈະ ຫຼື ບໍ່ຕໍ່ອາຍຸໃບອະນຸຍາດ ພາຍໃນ ສາມເດືອນ ຈະອອກຄຳສັ່ງຖອນໃບອະນຸຍາດສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພ.

**ມາດຕາ 22 ການຖອນ ໃບອະນຸຍາດສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພ**

ໃບອະນຸຍາດສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພ ຈະຖືກຖອນ ຍ້ອນສາເຫດ ດັ່ງນີ້:

1. ວິສາຫະກິດແມ່ ຖືກຖອນໃບອະນຸຍາດດຳເນີນທຸລະກິດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 19 ຂອງດຳລັດສະບັບນີ້;
2. ສາຂາວິສາຫະກິດ ບໍ່ໄດ້ປັບປຸງ ຕາມເງື່ອນໄຂທີ່ແຈ້ງໃນຄຳສັ່ງໂຈະ;
3. ບໍ່ຕໍ່ອາຍຸໃບອະນຸຍາດສ້າງຕັ້ງ ສາຂາວິສະຫະກິດຮັກສາຄວາມປອດໄພ ພາຍໃນ ສາມເດືອນ;
4. ສາຂາວິສາຫະກິດຮັກສາຄວາມປອດໄພ ມີຈຸດປະສົງຢຸດເຊົາດຳເນີນກິດຈະການ;
5. ບໍ່ປະຕິບັດຕາມ ມາດຕະຖານເງື່ອນໄຂ, ພັນທະ ແລະ ຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

ຫຼັງຈາກ ມີຄຳສັ່ງຖອນໃບອະນຸຍາດສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພແລ້ວ ຂະແໜງການປ້ອງກັນຄວາມສະຫງົບ ຕ້ອງແຈ້ງໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດບ່ອນສາຂາວິສາຫະກິດຕັ້ງຢູ່ຮັບຊາບ ພາຍໃນກຳນົດ

ທ້າວັນລັດຖະການ. ຄຳສັ່ງຖອນໃບອະນຸຍາດສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພ ຕ້ອງເຮັດເປັນລາຍລັກອັກສອນ.

ຫົວໜ້າກົມໃຫຍ່ພະລາທິການ ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ມີສິດອອກຄຳສັ່ງຖອນໃບອະນຸຍາດສ້າງຕັ້ງສາຂາວິສາຫະກິດຮັກສາຄວາມປອດໄພ.

# ພາກທີ III
# ກຳລັງຮັກສາຄວາມປອດໄພ
## ໝວດທີ 1
## ມາດຕະຖານ, ເງື່ອນໄຂ, ການປະກອບເອກະສານ, ຂັ້ນຕອນການການພິຈາລະນາ ແລະ ຜູ້ມີສິດຕົກລົງອະນຸຍາດເປັນກຳລັງຮັກສາຄວາມປອດໄພ

**ມາດຕາ 23 ກຳລັງຮັກສາຄວາມປອດໄພ**

ກຳລັງຮັກສາຄວາມປອດໄພ ແມ່ນກຳລັງປ້ອງກັນຄວາມສະຫງົບເຄິ່ງອາຊີບ ທີ່ສັງກັດຢູ່ໃນວິສາຫະກິດຮັກສາຄວາມປອດໄພ ຊຶ່ງໄດ້ຮັບການອະນຸຍາດ ແລະ ຢູ່ໃນການຄຸ້ມຄອງ ຂອງຂະແໜງການປ້ອງກັນຄວາມສະຫງົບ.

**ມາດຕາ 24 ມາດຕະຖານ ແລະ ເງື່ອນໄຂ ຜູ້ທີ່ຈະເປັນກຳລັງຮັກສາຄວາມປອດໄພ**

ຜູ້ທີ່ຈະເປັນກຳລັງຮັກສາຄວາມປອດໄພ ຕ້ອງມີມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ຖືສັນຊາດລາວ ແລະ ມີອາຍຸແຕ່ ສິບແປດປີ ຂຶ້ນໄປ ແຕ່ບໍ່ເກີນ ຫ້າສິບຫ້າປີ;
2. ຈົບການສຶກສາພາກບັງຄັບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
3. ມີປະຫວັດຈະແຈ້ງ;
4. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບມາກ່ອນ;
5. ຕ້ອງມີໃບຢັ້ງຢືນຜ່ານການຝຶກອົບຮົມວຽກງານຮັກສາຄວາມປອດໄພ ຈາກຂະແໜງການປ້ອງກັນຄວາມສະຫງົບ ຫຼື ສູນຝຶກອົບຮົມວຽກງານຮັກສາຄວາມປອດໄພທີ່ໄດ້ຮັບອະນຸຍາດ ຈາກກະຊວງປ້ອງກັນຄວາມສະຫງົບ;
6. ມີສຸຂະພາບແຂງແຮງສົມບູນ, ບໍ່ຕິດເຫຼົ້າ, ບໍ່ເສບຢາເສບຕິດ, ເປັນບຸກຄົນມີສະຕິສຳປະຊັນຍະສົມບູນ ແລະ ບໍ່ເປັນໃບ້ບ້າເສຍຈິດ;
7. ບໍ່ເຄີຍຖືກຖອນໃບອະນຸຍາດເປັນກຳລັງຮັກສາຄວາມປອດໄພມາກ່ອນ.

**ມາດຕາ 25 ການປະກອບເອກະສານເຂົ້າເປັນກຳລັງຮັກສາຄວາມປອດໄພ**

ການປະກອບເອກະສານເຂົ້າເປັນກຳລັງຮັກສາຄວາມປອດໄພ ປະຕິບັດ ດັ່ງນີ້:

1. ຄຳຮ້ອງ ຂອງບຸກຄົນ;
2. ຊີວະປະຫວັດ ໂດຍໄດ້ຮັບການຢັ້ງຢືນ ຈາກປ້ອງກັນຄວາມສະຫງົບກຸ່ມບ້ານ;
3. ໃບປະກາສະນີຍະບັດຂອງ ຜູ້ຂໍໃບອະນຸຍາດ ເປັນກຳລັງຮັກສາຄວາມປອດໄພ;
4. ສຳເນົາບັດປະຈຳຕົວ, ປຶ້ມສຳມະໂນຄົວ ແລະ ໃບຢັ້ງຢືນທີ່ຢູ່ ຢ່າງລະໜຶ່ງສະບັບ;
5. ໃບແຈ້ງໂທດຈາກສານ;

6. ໃບກວດສຸຂະພາບ ແລະ ໃບຢັ້ງຢືນຈາກແພດວ່າເປັນບຸກຄົນ ບໍ່ຕິດເຫຼົ້າ, ບໍ່ເສບຢາເສບຕິດ ເປັນບຸກຄົນມີສະຕິສໍາປະຊັນຍະສົມບູນ, ບໍ່ເປັນໃບ້ບ້າເສຍຈິດ ຈາກໂຮງໝໍ ຂັ້ນແຂວງ;

7. ໃບຢັ້ງຢືນຜ່ານການຝຶກອົບຮົມວຽກງານຮັກສາຄວາມປອດໄພ ຈາກຂະແໜງການປ້ອງກັນຄວາມສະຫງົບ ຫຼື ສູນຝຶກອົບຮົມວຽກງານຮັກສາຄວາມປອດໄພ ທີ່ໄດ້ຮັບອະນຸຍາດຈາກກະຊວງປ້ອງກັນຄວາມສະຫງົບ;

8. ຮູບຖ່າຍ ຂະໜາດ 4x6 ຈໍານວນ ສາມໃບ ບໍ່ໃຫ້ເກີນ ສາມເດືອນ;

9. ໜັງສືສັນຍາຈ້າງກັບວິສາຫະກິດຮັກສາຄວາມປອດໄພ.

**ມາດຕາ 26 ຂັ້ນຕອນການພິຈາລະນາ ຂໍເຂົ້າເປັນກໍາລັງຮັກສາຄວາມປອດໄພ**

ຜູ້ສະໜີຂໍໃບອະນຸຍາດເປັນກໍາລັງຮັກສາຄວາມປອດໄພ ຕ້ອງປະກອບເອກະສານໃຫ້ຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 25 ຂອງດໍາລັດສະບັບນີ້ ແລ້ວນໍາເອົາເອກະສານ ໄປຍື່ນຕໍ່ອົງການຄຸ້ມຄອງວິສາຫະກິດຮັກ ສາຄວາມປອດໄພ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ບ່ອນທີ່ຕົນເອງສັງກັດຢູ່ ຫຼື ບ່ອນທີ່ຕົນໄດ້ເຂົ້າຝຶກອົບຮົມ ພາຍຫຼັງທີ່ອົງການຄຸ້ມຄອງວິສາຫະກິດຮັກສາຄວາມປອດໄພ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ໄດ້ຄົ້ນຄວ້າຕົກລົງເຫັນດີ ແລ້ວນໍາສະເໜີ ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ອອກຂໍ້ຕົກລົງເປັນກໍາລັງຮັກສາຄວາມປອດໄພ ຕາມລະບຽບການ.

ຖ້າໃບອະນຸຍາດ ຫາກຖືກເສຍຫາຍ ຫຼື ຈີກຂາດ ເປື້ອນເປິ ຕ້ອງໄດ້ຂໍອະນຸຍາດຄືນໃໝ່ ຕາມທີ່ໄດ້ກໍານົດໄວ້ໃນວັກທີໜຶ່ງ ຂອງມາດຕານີ້.

**ມາດຕາ 27 ກໍານົດເວລາການພິຈາລະນາຕົກລົງເຂົ້າເປັນກໍາລັງຮັກສາຄວາມປອດໄພ**

ຫຼັງຈາກອົງການຄຸ້ມຄອງວິສາຫະກິດຮັກສາຄວາມປອດໄພ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ໄດ້ຮັບສໍານວນເອກະສານຄໍາຮ້ອງ ຂໍເຂົ້າເປັນກໍາລັງຮັກສາຄວາມປອດໄພ ຈາກບຸກຄົນ ຫຼື ຜູ້ປະກອບການ ຕ້ອງຄົ້ນຄວ້າ ແລະ ມີຄໍາເຫັນ ພາຍໃນກໍານົດ ຫ້າວັນລັດຖະການ ເມື່ອຄົບກໍານົດ ຫາກບໍ່ສາມາດມີຄໍາເຫັນ ຕ້ອງແຈ້ງໃຫ້ຜູ້ກ່ຽວ ຫຼື ຜູ້ປະກອບການຮັບຊາບເຫດຜົນ ພາຍໃນກໍານົດ ສອງວັນລັດຖະການ.

**ມາດຕາ 28 ຜູ້ມີສິດ ຕົກລົງເປັນກໍາລັງຮັກສາຄວາມປອດໄພ**

ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ເປັນຜູ້ມີສິດຕົກລົງ ເປັນກໍາລັງຮັກສາຄວາມປອດໄພ ຕາມການສະເໜີ ຂອງອົງການຄຸ້ມຄອງວິສາຫະກິດຮັກສາຄວາມປອດໄພ ຂັ້ນແຂວງ.

ສໍາລັບອາຍຸຂອງໃບອະນຸຍາດເປັນກໍາລັງຮັກສາຄວາມປອດໄພ ມີອາຍຸ ສາມປີ ນັບແຕ່ວັນອອກຂໍ້ຕົກລົງອະນຸຍາດ ຖ້າໝົດກໍານົດ ຕ້ອງຂໍອະນຸຍາດຕໍ່ອາຍຸ ຕາມລະບຽບການ.

## ໝວດທີ 2
## ການຕໍ່ອາຍຸ ແລະ ການຖອນ ໃບອະນຸຍາດກໍາລັງຮັກສາຄວາມປອດໄພ

**ມາດຕາ 29 ການຕໍ່ອາຍຸໃບອະນຸຍາດກໍາລັງຮັກສາຄວາມປອດໄພ**

ການຂໍຕໍ່ໃບອະນຸຍາດກໍາລັງຮັກສາຄວາມປອດໄພ ມີດັ່ງນີ້:

1. ໜັງສືສະເໜີ ຂໍຕໍ່ອາຍຸ ຈາກວິສາຫະກິດຮັກສາຄວາມປອດໄພ;

2. ໃບອະນຸຍາດ ເປັນກຳລັງຮັກສາຄວາມປອດໄພ ສະບັບເດີມ;

3. ສຳເນົາບັດປະຈຳຕົວ;

4. ໃບກວດສຸຂະພາບ;

5. ໃບຢັ້ງຢືນຮັບຮອງຈາກແພດວ່າເປັນບຸກຄົນ ບໍ່ຕິດເຫຼົ້າ, ບໍ່ເສບຢາເສບຕິດ, ເປັນຄົນມີສະຕິສຳປະຊັນຍະສົມບູນ, ບໍ່ເປັນໃບ້ບ້າເສຍຈິດ ຈາກໂຮງໝໍ ຂັ້ນແຂວງ;

6. ຮູບຖ່າຍ ຂະໜາດ 4x6 ຈຳນວນ ສາມໃບ ບໍ່ເກີນສາມເດືອນ.

ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ເປັນຜູ້ມີສິດຕໍ່ອາຍຸໃບອະນຸຍາດກຳລັງຮັກສາຄວາມ ປອດໄພ.

**ມາດຕາ 30 ການຖອນໃບອະນຸຍາດກຳລັງຮັກສາຄວາມປອດໄພ**

ໃບອະນຸຍາດກຳລັງຮັກສາຄວາມປອດໄພ ຈະຖືກຖອນ ຍ້ອນສາເຫດ ດັ່ງນີ້:

1. ຜູ້ເປັນກຳລັງຮັກສາຄວາມປອດໄພເສຍຊີວິດ;
2. ມີການປອມແປງເອກະສານ;
3. ຖືກປະຕິບັດວິໄນໄລ່ອອກຈາກວິສາຫະກິດຮັກສາຄວາມປອດໄພ;
4. ເປັນບຸກຄົນ ຕິດເຫຼົ້າ ແລະ ສິ່ງເສບຕິດຕ່າງໆ ທີ່ມີຜົນຕໍ່ລະບົບປະສາດ;
5. ເປັນບຸກຄົນ ສຸຂະພາບບໍ່ແຂງແຮງ, ສະຕິສຳປະຊັນຍະບໍ່ສົມບູນ;
6. ບໍ່ປະຕິບັດຕາມ ມາດຕະຖານ, ເງື່ອນໄຂ, ພັນທະ ແລະ ຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ເປັນຜູ້ມີສິດອອກຄຳສັ່ງຖອນໃບອະນຸຍາດກຳລັງຮັກສາຄວາມປອດໄພ.

## ໝວດທີ 3

## ການຝຶກອົບຮົມກຳລັງຮັກສາຄວາມປອດໄພ

**ມາດຕາ 31 ການຝຶກອົບຮົມກຳລັງຮັກສາຄວາມປອດໄພ**

ກຳລັງຮັກສາຄວາມປອດໄພ ທຸກຄົນຕ້ອງໄດ້ຜ່ານການຝຶກອົບຮົມວຽກງານຮັກສາຄວາມປອດໄພ ພາກບັງຄັບ ຂັ້ນພື້ນຖານ ແລະ ການຝຶກອົບຮົມ ຈະມີຫຼາຍລະດັບແຕກຕ່າງກັນ ໂດຍອີງຕາມເງື່ອນໄຂ ແລະ ຄວາມຮັບຜິດຊອບ ໃນການປະຕິບັດໜ້າທີ່ຮັກສາຄວາມປອດໄພ. ການຝຶກອົບຮົມວຽກງານຮັກສາຄວາມປອດໄພ ແມ່ນການຝຶກວິຊາຊີບທົ່ວໄປ ໃຫ້ບຸກຄົນທີ່ສົນໃຈເປັນກຳລັງຮັກສາຄວາມປອດໄພ.

**ມາດຕາ 32 ອົງການຮັບຜິດຊອບການຝຶກອົບຮົມວຽກງານຮັກສາຄວາມປອດໄພ**

ກະຊວງປ້ອງກັນຄວາມສະຫງົບ, ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ແລະ ສູນຝຶກອົບຮົມຂອງວິສາຫະກິດຮັກສາຄວາມປອດໄພ ເປັນຜູ້ຮັບຜິດຊອບໃນການຝຶກອົບຮົມ ໃຫ້ກຳລັງຮັກສາຄວາມປອດໄພ.

**ມາດຕາ 33 ໂຄງສ້າງຫຼັກສູດ**

ໂຄງສ້າງຫຼັກສູດຝຶກອົບຮົມວຽກງານຮັກສາຄວາມປອດໄພ ມີ ສອງຂັ້ນ ດັ່ງນີ້:

1. ຫຼັກສູດຝຶກອົບຮົມຂັ້ນພື້ນຖານ ນໍາໃຊ້ເຂົ້າໃນການຝຶກອົບຮົມ ໃຫ້ກໍາລັງຮັກສາຄວາມປອດໄພ ທີ່ເຮັດໜ້າທີ່ຮັກສາຄວາມປອດໄພ ຢູ່ບັນດາ ພື້ນຖານການຜະລິດ, ຫົວໜ່ວຍທຸລະກິດ, ສໍານັກງານ, ທີ່ຢູ່ອາໃສ, ອົງການຈັດຕັ້ງຕ່າງໆ, ການຈັດສັນຄວາມເປັນລະບຽບການຈະລາຈອນ ແລະ ການບໍລິການຮັກສາຄວາມປອດໄພ, ການເຄື່ອນໄຫວກິລາ, ງານເທດສະການ ແລະ ກິດຈະກໍາອື່ນໆ. ການຝຶກອົບຮົມວຽກງານຮັກສາຄວາມປອດໄພ ຂັ້ນພື້ນຖານ ປະກອບມີວິຊາ ດັ່ງນີ້:

- ຄວາມຮູ້ພື້ນຖານທິດສະດີການເມືອງ;
- ຄວາມຮູ້ພື້ນຖານກົດໝາຍ ແລະ ລະບຽບການທີ່ກ່ຽວພັນກັບກໍາລັງຮັກສາຄວາມປອດໄພ;
- ວິຊາງົດງາມ;
- ວິຊາປ້ອງກັນຕົວມືເປົ່າ;
- ການໃຊ້ ກະບອງ, ກະແຈມື ແລະ ອາວຸດອື່ນ;
- ການລາຍງານເຫດການ ແລະ ປ້ອງກັນສະຖານທີ່ເກີດເຫດ;
- ວິຊາສະກັດກັ້ນ ແລະ ຕ້ານອັກຄີໄພ;
- ມາລະຍາດ ໃນການສົນທະນາ, ສື່ສານ ແລະ ຂັ້ນຕອນການໃຊ້ວິທະຍຸສື່ສານ;
- ມາລະຍາດໃນສັງຄົມ ແລະ ມະນຸດສໍາພັນ;
- ວິຊາການຈັດການຈະລາຈອນ ແລະ ການໃຫ້ສັນຍານຈະລາຈອນ;
- ການປະຖົມພະຍາບານເບື້ອງຕົ້ນ ແລະ ຊ່ວຍເຫຼືອຜູ້ຖືກບາດເຈັບ;
- ສັງເກດການ ແລະ ກວດກາລາດຕະເວນ;
- ການຂຽນລາຍງານບັນທຶກປະຈໍາວັນ;
- ຄວາມຮູ້ກ່ຽວກັບການປະຕິບັດໜ້າທີ່ຮັກສາຄວາມປອດໄພ ແລະ ການແກ້ໄຂບັນຫາສະເພາະໜ້າຕ່າງໆ.

ກໍານົດເວລາການຝຶກອົບຮົມວິຊາຂັ້ນພື້ນຖານວຽກງານຮັກສາຄວາມປອດໄພ ສູງສຸດ ສາມສິບວັນ, ຄ່າໃຊ້ຈ່າຍໃນການຝຶກອົບຮົມ ແມ່ນບຸກຄົນຜູ້ຝຶກອົບຮົມ ຫຼື ຫົວໜ່ວຍ ວິສາຫະກິດຮັກສາຄວາມປອດໄພ ເປັນຜູ້ຈ່າຍຕາມລາຄາທີ່ທາງການໄດ້ກໍານົດ.

2. ຫຼັກສູດຝຶກອົບຮົມຂັ້ນສູງ ນໍາໃຊ້ເຂົ້າໃນການຝຶກອົບຮົມ ໃຫ້ກໍາລັງຮັກສາຄວາມປອດໄພ ທີ່ເຮັດໜ້າທີ່ຮັກສາຄວາມປອດໄພ ໃຫ້ບຸກຄົນສໍາຄັນ, ສະຖານທີ່ຊຸັບສິນມີຄ່າ, ທະນາຄານ, ຫົວໜ່ວຍທຸລະກິດ ຂາຍວັດຖຸມີຄ່າ, ການຂົນສົ່ງເງິນຕາ-ວັດຖຸມີຄ່າ ແລະ ສະຖານທີ່ສໍາຄັນ ເຊັ່ນ ພິພິທະພັນ ນອກຈາກຫຼັກສູດຝຶກອົບຮົມຂັ້ນພື້ນຖານ ຕ້ອງໄດ້ຝຶກອົບຮົມວິຊາ ດັ່ງນີ້:

- ວິຊາມວຍຂັ້ນສູງ;
- ວິຊາປ້ອງກັນບຸກຄົນສໍາຄັນ;
- ການໃຊ້ອາວຸດເສິກ ທັງປືນ ສັ້ນ ແລະ ເຫຼັກຍາວ.

ກໍານົດເວລາ ການຝຶກອົບຮົມນອກຈາກວິຊາຂັ້ນພື້ນຖານວຽກງານຮັກສາຄວາມປອດໄພ ຕ້ອງໄດ້ຝຶກອົບຮົມເພີ່ມ ເວລາຝຶກອົບຮົມອີກ ສູງສຸດ ຫົກສິບວັນ ລວມທັງວິຊາຂັ້ນພື້ນຖານ. ຄ່າໃຊ້ຈ່າຍໃນການຝຶກອົບຮົມ ແມ່ນບຸກຄົນ ຜູ້ຝຶກອົບຮົມ ຫຼື ຫົວໜ່ວຍ ວິສາຫະກິດຮັກສາຄວາມປອດໄພ ເປັນຜູ້ຈ່າຍ ຕາມລາຄາທີ່ທາງການໄດ້ກໍານົດ.

**ມາດຕາ 34 ການອະນຸມັດຜ່ານຫຼັກສູດຮັກສາຄວາມປອດໄພ**

ຜູ້ທີ່ມີຈຸດປະສົງສ້າງຕັ້ງສູນ ຫຼື ສະຖາບັນຝຶກອົບຮົມວຽກງານຮັກສາຄວາມປອດໄພ ຕ້ອງນໍາເອົາຫຼັກສູດ ແລະ ຕໍາລາການຮຽນການສອນ ມາສະເໜີຕໍ່ກະຊວງປ້ອງກັນຄວາມສະຫງົບ ເພື່ອພິຈາລະນາອະນຸມັດ.

ສໍາລັບ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ແມ່ນບໍ່ມີສິດອະນຸຍາດຕົກລົງ ກ່ຽວກັບ ຫຼັກສູດຮັກສາຄວາມປອດໄພ, ແຕ່ມີສິດຕິດຕາມ, ກວດກາ ແລະ ປະເມີນຜົນຂອງການຝຶກອົບຮົມ.

**ມາດຕາ 35 ເງື່ອນໄຂການສ້າງສູນຝຶກອົບຮົມຂອງວິສາຫະກິດຮັກສາຄວາມປອດໄພ**

ການສ້າງຕັ້ງສູນຝຶກອົບຮົມຂອງວິສາຫະກິດຮັກສາຄວາມປອດໄພ ມີເງື່ອນໄຂ ດັ່ງນີ້:

1. ຕ້ອງມີກໍາລັງຮັກສາຄວາມປອດໄພ ແຕ່ ສອງຮ້ອຍຄົນ ຂຶ້ນໄປ;
2. ຕ້ອງມີ ຫ້ອງຮຽນ ແລະ ສູນຝຶກແອບ ໃຫ້ກໍາລັງຮັກສາຄວາມປອດໄພ;
3. ຕ້ອງມີ ຄູຝຶກ ດ້ວຍຕົນເອງ ຫຼື ຄູຝຶກ ທີ່ໄດ້ເຊັນສັນຍາກັບສະຖາບັນອື່ນ ຊຶ່ງຄູຝຶກຕ້ອງມີລະດັບວິຊາການທີ່ເໝາະສົມ ແລະ ມີຄຸນວຸດທິການສຶກສາ ແຕ່ຊັ້ນກາງຂຶ້ນໄປ ຍົກເວັ້ນ ມວຍວິຊາສະເພາະ.

   ສໍາລັບ ຄູຝຶກ ຫຼື ຊ່ຽວຊານ ທີ່ເປັນຄົນຕ່າງປະເທດ ຕ້ອງໄດ້ຮັບການຕົກລົງເຫັນດີ ຈາກກະຊວງປ້ອງກັນຄວາມສະຫງົບ;
4. ຕ້ອງມີຫຼັກສູດ ໂດຍຜ່ານການອະນຸຍາດ ຈາກກະຊວງປ້ອງກັນຄວາມສະຫງົບ.

**ມາດຕາ 36 ການປະກອບເອກະສານສ້າງຕັ້ງສູນຝຶກອົບຮົມວຽກງານຮັກສາຄວາມປອດໄພ**

ການປະກອບເອກະສານສ້າງຕັ້ງສູນຝຶກອົບຮົມວຽກງານຮັກສາຄວາມປອດໄພ ມີດັ່ງນີ້:

1. ໜັງສືສະເໜີ ຂອງນິຕິບຸກຄົນ;
2. ໃບທະບຽນສ້າງຕັ້ງວິສາຫະກິດ;
3. ໃບອະນຸຍາດດໍາເນີນທຸລະກິດຮັກສາຄວາມປອດໄພ;
4. ບັນຊີຈໍານວນພົນກໍາລັງຮັກສາຄວາມປອດໄພ ຖ້າຫາກແມ່ນວິສາຫະກິດຮັກສາຄວາມປອດໄພ;
5. ບັນຊີຈໍານວນຄູຝຶກ ແລະ ສໍາເນົາປະກາສະນິຍະບັດ;
6. ຕໍາລາສິດສອນ;
7. ແຜນທີ່ ທີ່ຕັ້ງ ບໍລິເວນ ສະຖານທີ່ຝຶກອົບຮົມ;
8. ທີ່ພັກສໍາລັບຜູ້ຝຶກອົບຮົມ.

**ມາດຕາ 37 ຂັ້ນຕອນການພິຈາລະນາສ້າງຕັ້ງສູນ ຫຼື ຜ່ານຫຼັກສູດຝຶກອົບຮົມ**

ສູນ ຫຼື ສະຖາບັນການຝຶກອົບຮົມວຽກງານຮັກສາຄວາມປອດໄພ ຂັ້ນກະຊວງ, ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ແລະ ຫົວໜ່ວຍວິສາຫະກິດຮັກສາຄວາມປອດໄພ ກ່ອນຈະສ້າງຕັ້ງສູນ ຫຼື ສະຖາບັນການຝຶກອົບຮົມ ວຽກງານຮັກສາຄວາມປອດໄພ ຕ້ອງປະກອບເອກະສານຄົບຊຸດ ມາຜ່ານອົງການຄຸ້ມຄອງວິສາຫະກິດຮັກສາຄວາມປອດໄພ ກະຊວງປ້ອງກັນຄວາມສະຫງົບ ຄົ້ນຄວ້າພິຈາລະນາຕົກລົງ.

**ມາດຕາ 38 ກໍານົດເວລາການພິຈາລະນາສ້າງຕັ້ງສູນ ຫຼື ຜ່ານຫຼັກສູດຝຶກອົບຮົມວຽກງານຮັກສາຄວາມປອດໄພ**

ກໍານົດເວລາການພິຈາລະນາສ້າງຕັ້ງສູນ ຫຼື ຜ່ານຫຼັກສູດຝຶກອົບຮົມວຽກງານຮັກສາຄວາມປອດໄພ ມີດັ່ງນີ້:

ພາຍຫຼັງທີ່ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ໄດ້ຮັບສໍານວນເອກະສານຄໍາຮ້ອງ ຂໍອະນຸຍາດສ້າງຕັ້ງສູນ ຫຼື ຜ່ານຫຼັກສູດຝຶກອົບຮົມວຽກງານຮັກສາຄວາມປອດໄພຈາກຜູ້ປະກອບການ ຂັ້ນແຂວງ ຕ້ອງຄົ້ນຄວ້າ ແລະ ຢັ້ງຢືນ ພາຍໃນກໍານົດ ຫ້າວັນລັດຖະການ;

ເມື່ອກະຊວງປ້ອງກັນຄວາມສະຫງົບ ໄດ້ຮັບເອກະສານຢັ້ງຢືນ ຈາກກອງບັນຊາການປ້ອງກັນຄວາສະຫງົບຂັ້ນແຂວງ ແລ້ວ ຕ້ອງຄົ້ນຄວ້າ ແລະ ມີຄໍາເຫັນ ພາຍໃນກໍານົດ ສາມສິບວັນລັດຖະການ ເມື່ອຄົບກໍານົດ ຫາກບໍ່ສາມາດມີຄໍາເຫັນ ຕ້ອງແຈ້ງໃຫ້ຜູ້ປະກອບການຮັບຊາບເຫດຜົນ ພາຍໃນກໍານົດ ຫ້າວັນລັດຖະການ.

**ມາດຕາ 39 ຜູ້ມີສິດ ຕົກລົງອະນຸຍາດສ້າງຕັ້ງສູນ ແລະ ຫຼັກສູດຝຶກອົບຮົມວຽກງານຮັກສາຄວາມປອດໄພ**

ລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຕົກລົງອະນຸຍາດ ສ້າງຕັ້ງສູນ ແລະ ຫຼັກສູດຝຶກອົບຮົມວຽກງານຮັກສາຄວາມປອດໄພ ຕາມການສະເໜີຂອງ ອົງການຄຸ້ມຄອງວິສາຫະກິດຮັກສາຄວາມປອດໄພ ຂອງກະຊວງປ້ອງກັນຄວາມສະຫງົບ ໂດຍຜ່ານຫ້ອງວ່າການ ກະຊວງປ້ອງກັນຄວາມສະຫງົບ.

**ມາດຕາ 40 ການໂຈະ ຫຼື ຖອນໃບອະນຸຍາດສ້າງຕັ້ງສູນ**

ການໂຈະ ຫລື ການຖອນໃບອະນຸຍາດສ້າງຕັ້ງ ສູນຝຶກອົບຮົມວຽກງານຮັກສາຄວາມປອດໄພໄດ້ ກໍຕໍ່ເມື່ອຫົວໜ່ວຍວິສາຫະກິດຮັກສາຄວາມປອດໄພ ບໍ່ປະຕິບັດຕາມເງື່ອນໄຂ ຫຼື ສະເໜີຂໍຍຸບເລີກ ຫຼື ວິສາຫະກິດຮັກສາຄວາມປອດໄພ ຖືກຍຸບເລີກ.

ຂັ້ນໃດຕົກລົງສ້າງຕັ້ງ ຂັ້ນນັ້ນເປັນຜູ້ມີສິດອອກຄໍາສັ່ງ ໂຈະ ຫຼື ຖອນ ໃບອະນຸຍາດສ້າງຕັ້ງສູນຝຶກອົບຮົມວຽກງານຮັກສາຄວາມປອດໄພ ຂອງວິສາຫະກິດຮັກສາຄວາມປອດໄພ.

**ມາດຕາ 41 ການປະກອບເອກະສານເຂົ້າຝຶກອົບຮົມເປັນກໍາລັງຮັກສາຄວາມປອດໄພ**

ການປະກອບເອກະສານເຂົ້າຝຶກອົບຮົມເປັນກໍາລັງຮັກສາຄວາມປອດໄພ ມີດັ່ງນີ້

1. ໜັງສືສະເໜີ ຂອງວິສາຫະກິດຮັກສາຄວາມປອດໄພ ຖ້າຫົວໜ່ວຍທຸລະກິດເປັນຜູ້ຕາງໜ້າ ສະເໜີ;

ສໍາລັບບຸກຄົນອື່ນທົ່ວໄປ ທີ່ມີຈຸດປະສົງເຂົ້າຝຶກອົບຮົມ ຕ້ອງປະກອບເອກະສານ ຕາມລະບຽບການ ຂອງສູນຝຶກອົບຮົມທີ່ກໍານົດໄວ້.

2. ໜັງສືສັນຍາຈ້າງ ກັບວິສາຫະກິດຮັກສາຄວາມປອດໄພ ຖ້າຫົວໜ່ວຍທຸລະກິດເປັນຜູ້ສະເໜີຂໍໃບອະນຸຍາດ ເປັນກໍາລັງຮັກສາຄວາມປອດໄພ;

3. ລວມທັງເອກະສານທີ່ກ່ຽວຂ້ອງຂອງຜູ້ກ່ຽວ ທີ່ຈະເຂົ້າເປັນກໍາລັງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 25 ຂອງດໍາລັດສະບັບນີ້.

# ພາກທີ IV
# ພາລະບົດບາດ, ສິດ, ໜ້າທີ່ ແລະ ພັນທະ ຂອງວິສາຫະກິດ ແລະ ກຳລັງຮັກສາຄວາມປອດໄພ

## ໝວດທີ 1
## ພາລະບົດບາດ, ສິດ, ໜ້າທີ່ ແລະ ພັນທະ ຂອງວິສາຫະກິດຮັກສາຄວາມປອດໄພ

**ມາດຕາ 42 ພາລະບົດບາດວິສາຫະກິດຮັກສາຄວາມປອດໄພ**

ວິສາຫະກິດຮັກສາຄວາມປອດໄພ ມີພາລະບົດບາດ ໃນການດຳເນີນທຸລະກິດ ໃນຂົງເຂດການບໍລິການຮັກສາຄວາມປອດໄພໃຫ້ແກ່ ບຸກຄົນ, ຊັບສິນ, ພື້ນຖານການຜະລິດ, ຫົວໜ່ວຍທຸລະກິດ, ສຳນັກງານ, ທີ່ຢູ່ອາໄສ, ອົງການຈັດຕັ້ງຕ່າງໆ, ການຂົນສົ່ງເງິນຕາ-ວັດຖຸມີຄ່າ, ຈັດສັນຄວາມເປັນລະບຽບການຈະລາຈອນ ແລະ ການບໍລິການຮັກສາຄວາມປອດໄພ ມີລັກສະນະຊົ່ວຄາວ ເຊັ່ນ ການເຄື່ອນໄຫວກິລາ, ງານເທດສະການ ແລະ ກິດຈະກຳອື່ນ ແລະ ມີໜ້າທີ່ໃນການບໍລິຫານຈັດການກຳລັງຮັກສາຄວາມປອດໄພ ເຄື່ອນໄຫວວຽກງານໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 43 ສິດຂອງວິສາຫະກິດຮັກສາຄວາມປອດໄພ**

ວິສາຫະກິດຮັກສາຄວາມປອດໄພ ມີສິດ ດັ່ງນີ້:

1. ສ້າງຕັ້ງ ຫຼື ຍຸບເລີກ ບັນດາໜ່ວຍງານຂອງວິສາຫະກິດຮັກສາຄວາມປອດໄພ;
2. ຈັດຕັ້ງສະພາບໍລິຫານ ຕາມກົດໝາຍ ແລະ ລະບຽບການ;
3. ສຳຫຼວດເກັບກຳຂໍ້ມູນ, ຂຶ້ນສະຖິຕິ, ເລືອກເຟັ້ນ ແລະ ເຊັນສັນຍາຜູກພັນກັບລູກຄ້າດ້ວຍຄວາມເພິ່ງພໍໃຈທັງສອງຝ່າຍ ຫຼື ຫຼາຍຝ່າຍ;
4. ຮັບສະໝັກ, ຄັດເລືອກ, ຮັບເອົາພະນັກງານ ແລະ ກຳລັງຮັກສາຄວາມປອດໄພ ທີ່ໄດ້ຜ່ານການຝຶກອົບຮົມ ແລະ ມີໃບອະນຸຍາດ ເປັນກຳລັງຮັກສາຄວາມປອດໄພ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ;
5. ມີທີ່ປຶກສາ, ວິຊາການດ້ານຕ່າງໆ ພາຍໃນ ແລະ ຕ່າງປະເທດ ຕາມຄວາມເໝາະສົມ;
6. ຄົ້ນຄວ້າປະຕິບັດນະໂຍບາຍ ຫຼື ລົງວິໄນຕໍ່ພະນັກງານ, ກຳລັງຮັກສາຄວາມປອດໄພ ຂອງຕົນຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ;
7. ນຳເຂົ້າ, ສະໜອງ, ຄຸ້ມຄອງ, ຕິດຕາມ, ກວດກາ ການນຳໃຊ້ ວັດຖຸປະກອນເຕັກນິກ, ພາຫະນະໃຫ້ແກ່ການເຄື່ອນໄຫວວຽກງານ ວິສາຫະກິດຮັກສາຄວາມປອດໄພ ບົນພື້ນຖານທີ່ໄດ້ກຳນົດໄວ້ໃນໃບອະນຸຍາດດຳເນີນທຸລະກິດ ແລະ ຈາກຂະແໜງການ ທີ່ກ່ຽວຂ້ອງ;
8. ພົວພັນປະສານສົມທົບ ກັບ ຂະແໜງການທີ່ກ່ຽວຂ້ອງ ຂອງກະຊວງປ້ອງກັນຄວາມສະຫງົບ, ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ, ຂັ້ນເມືອງ, ອົງການປົກຄອງທ້ອງຖິ່ນ ແລະ ກຳລັງປະກອບອາວຸດອື່ນ ເພື່ອພ້ອມກັນເຮັດໜ້າທີ່ວຽກງານຮັກສາຄວາມສະຫງົບ ທາງດ້ານການເມືອງ ແລະ ຄວາມເປັນລະບຽບຮຽບຮ້ອຍທາງດ້ານສັງຄົມ;
9. ຮ່ວມທຶນ ກັບຕ່າງປະເທດບົນພື້ນຖານຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ;

10. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 44 ໜ້າທີ່ ຂອງວິສາຫະກິດຮັກສາຄວາມປອດໄພ**

ວິສາຫະກິດຮັກສາຄວາມປອດໄພ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າເຊື່ອມຊຶມ ກຳແໜ້ນແນວທາງນະໂຍບາຍ ຂອງພັກ, ກົດໝາຍ ແລະ ລະບຽບການ ເພື່ອຫັນເປັນແຜນການ, ແຜນງານ, ໂຄງການອັນລະອຽດ ແລະ ນຳໄປຈັດຕັ້ງປະຕິບັດ ເຂົ້າໃນວຽກງານຮັກສາຄວາມປອດໄພຢ່າງເຂັ້ມງວດ;

2. ສຶກສາອົບຮົມແນວຄິດການເມືອງ ໃຫ້ແກ່ພະນັກງານ, ກຳລັງຮັກສາຄວາມປອດໄພ ໃຫ້ມີທັດສະນະຫຼັກໝັ້ນໜັ້ນຊຶ່ງຊົ້ນ, ຮູ້ຈຳແນກມິດ-ສັດຕູ ມີຄວາມສັດຊື່ບໍລິສຸດ ແລະ ມີລະບຽບວິໄນເຂັ້ມງວດ;

3. ດຳເນີນທຸລະກິດ ຕາມກົດໝາຍ ແລະ ລະບຽບການ ທີ່ໄດ້ກຳນົດໄວ້ຢ່າງເຂັ້ມງວດ, ສ້າງລະບຽບການທີ່ພົວພັນເຖິງ ວຽກງານຄຸ້ມຄອງບໍລິຫານຈັດການທຸລະກິດຂອງຕົນເປັນອັນສະເພາະ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການ;

4. ຈັດຕັ້ງປະຕິບັດ ບັນດາຂໍ້ຜູກພັນສັນຍາ ກ່ຽວກັບ ການບໍລິການຮັກສາຄວາມປອດໄພ ໃຫ້ແກ່ລູກຄ້າຢ່າງຄົບຖ້ວນ, ມີຄວາມເປັນທຳ ແລະ ຮັບປະກັນຄວາມສະຫງົບປອດໄພ;

5. ກໍ່ສ້າງ, ຝຶກແອບ ໃຫ້ກຳລັງຮັກສາຄວາມປອດໄພ ມີຄວາມຊຳນານທາງດ້ານວິຊາສະເພາະ ແລະ ມີຄວາມຮັບຜິດຊອບດ້ານການບໍລິການ; ຄຸ້ມຄອງກຳລັງຮັກສາຄວາມປອດໄພ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ແລະ ປະຕິບັດໃຫ້ຖືກຕ້ອງຕາມກົດໝາຍແຮງງານ;

6. ຈັດຕັ້ງເຄື່ອນໄຫວ ພະລະບົດບາດ, ໜ້າທີ່, ຂອບເຂດສິດ ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ;

7. ປະສານສົມທົບ ແລະ ໃຫ້ຄວາມຮ່ວມມື ກັບເຈົ້າໜ້າທີ່ຕຳຫຼວດທີ່ກ່ຽວຂ້ອງທຸກຂັ້ນ ທີ່ຫົວໜ່ວຍທຸລະກິດຂອງຕົນຕັ້ງຢູ່ ນັບທັງ ສາຂາ ແລະ ຫົວໜ່ວຍບໍລິການ;

8. ປະຕິບັດລະບອບສ່ອງແສງລາຍງານ, ສະຫຼຸບລາຍງານ ປະຈຳອາທິດ, ປະຈຳເດືອນ, ປະຈຳໄຕມາດ, ປະຈຳ ຫົກເດືອນ ແລະ ໜຶ່ງປີ ໃຫ້ຄະນະກຳມະການຄຸ້ມຄອງ ວິສາຫະກິດ ແລະ ກຳລັງຮັກສາຄວາມປອດໄພກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ບ່ອນຫົວໜ່ວຍວິສາຫະກິດຮັກສາຄວາມປອດໄພຕັ້ງຢູ່ ນັບທັງສາຂາ ແລະ ໜ່ວຍບໍລິການຮັກສາຄວາມປອດໄພ;

9. ເຂົ້າຮ່ວມກອງປະຊຸມປຶກສາຫາລື ກັບກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ຫຼື ກະຊວງປ້ອງກັນຄວາມສະຫງົບ ຕາມຈົດໝາຍເຊີນ;

10. ເກັບກຳບັນຊີ ພະນັກງານ, ກຳລັງຮັກສາຄວາມປອດໄພ, ພາຫະນະ, ອາວຸດ, ວັດຖຸປະກອບຊ່ວຍໜູນ ແລະ ເຕັກໂນໂລຊີ ທີ່ນຳໃຊ້ເຂົ້າໃນການບໍລິການຮັກສາຄວາມປອດໄພ;

11. ປະກອບ ເຄື່ອງແບບ, ເຄື່ອງໝາຍ, ອາວຸດ ແລະ ວັດຖຸປະກອບຊ່ວຍໜູນອື່ນ ໃຫ້ກຳລັງຮັກສາຄວາມປອດໄພ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ;

12. ເຮັດສັນຍາແຮງງານ ກັບ ກຳລັງຮັກສາຄວາມປອດໄພ ຕາມກົດໝາຍ ແລະ ລະບຽບການ;

13. ປະຕິບັດຕາມການມອບໝາຍ ຈາກກະຊວງປ້ອງກັນຄວາມສະຫງົບ ແລະ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ;

14. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 45 ພັນທະຂອງວິສາຫະກິດຮັກສາຄວາມປອດໄພ**

ວິສາຫະກິດຮັກສາຄວາມປອດໄພ ມີພັນທະ ດັ່ງນີ້:

1. ເຄື່ອນໄຫວທຸລະກິດ ຕາມວັດຖຸປະສົງຂອງຕົນ, ປະຕິບັດພັນທະຕໍ່ລັດ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງ ຜູ້ອອກແຮງງານ ແລະ ລູກຄ້າ;

2. ພາຍຫຼັງໄດ້ຮັບອະນຸຍາດດຳເນີນທຸລະກິດ ຕ້ອງປະຕິບັດ ດັ່ງນີ້:

- ພາຍໃນ ຫົກເດືອນ ຕ້ອງຕິດຕັ້ງສູນວິທະຍຸສື່ສານ ໃຫ້ສຳເລັດ ຕາມລະບຽບການ;
- ຕ້ອງເຄື່ອນໄຫວດຳເນີນທຸລະກິດທັນທີ ແລະ ພາຍໃນ ໜຶ່ງປີ ຕ້ອງໄດ້ເຮັດສັນຍາກັບລູກຄ້າ ຕໍ່າສຸດ ຫ້າລູກຄ້າ ແລະ ມີກຳລັງຮັກສາຄວາມປອດໄພລວມທັງໝົດຕໍ່າສຸດ ຊາວຄົນ ແລະ ພາຍໃນ ສາມປີ ຕ້ອງໃຫ້ມີກຳລັງຮັກສາຄວາມປອດໄພ ຮ້ອຍຄົນ ຂຶ້ນໄປ.

3. ປະກອບສ່ວນ ເຂົ້າໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເຄົາລົບ ແລະ ປະຕິບັດກົດໝາຍ ແລະ ລະບຽບການ;

4. ປະກອບສ່ວນ ເຂົ້າໃນວຽກງານຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ທາງດ້ານສັງຄົມ ເຊັ່ນ ງານສຳຄັນຕ່າງໆຂອງຊາດ ຕາມການມອບໝາຍ ຂອງກະຊວງປ້ອງກັນຄວາມສະຫງົບ ຫຼື ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ແລະ ຂັ້ນເມືອງ ໂດຍບໍ່ຮຽກຮ້ອງຜົນຕອບແທນ;

5. ປະກອບສ່ວນ ເງິນສູນຈຸດຫ້າສ່ວນຮ້ອຍ ຂອງມູນຄ່າສັນຍາບໍລິການຮັກສາຄວາມປອດໄພ ເພື່ອພັດທະນາວຽກງານຮັກສາຄວາມປອດໄພ;

6. ເສຍພາສີ, ອາກອນ, ຄ່າທຳນຽມ, ຄ່າໃຊ້ຈ່າຍໃນການຝຶກອົບຮົມສຳມະນາ ແລະ ການບໍລິການອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ;

7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ພາລະບົດບາດ, ສິດ, ໜ້າທີ່ ແລະ ພັນທະ
## ຂອງກຳລັງຮັກສາຄວາມປອດໄພ

**ມາດຕາ 46 ພາລະບົດບາດກຳລັງຮັກສາຄວາມປອດໄພ**

ກຳລັງຮັກສາຄວາມປອດໄພ ມີພາລະບົດບາດໃນການປ້ອງກັນ, ເວນຍາມ ຢູ່ສຳນັກງານ, ອົງການ, ໂຮງງານ, ໂຮງໝໍ, ໂຮງຮຽນ, ຫົວໜ່ວຍທຸລະກິດ, ອົງການຈັດຕັ້ງສາກົນ, ສະຖານທູດ, ສະຖານກົງສູນ, ສະຖາບັນ, ເຮືອນພັກຂອງຄົນຕ່າງປະເທດ ແລະ ພົນລະເມືອງລາວ, ປ້ອງກັນບຸກຄົນສຳຄັນ, ປ້ອງກັນການຂົນສົ່ງເງິນຕາ ແລະ ວັດຖຸມີຄ່າ, ຈັດສັນຄວາມເປັນລະບຽບ, ການຈະລາຈອນ ແລະ ການບໍລິການຮັກສາຄວາມປອດໄພ ມີລັກສະນະຊົ່ວຄາວ ເຊັ່ນ ການເຄື່ອນໄຫວກິລາ, ງານເທດສະການ ແລະ ອື່ນໆ ເພື່ອຮັບປະກັນຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະ ບຽບຮຽບຮ້ອຍ ຕາມໜ້າທີ່ຮັບຜິດຊອບ. ກຳລັງຮັກສາຄວາມປອດໄພ ປະກອບມີ ກຳລັງທີ່ເຮັດໜ້າທີ່ສາຍກວດ ແລະ ກຳລັງປ້ອງກັນເວນຍາມ, ສະເພາະພະນັກງານບໍລິຫານຫ້ອງການ ຈະບໍ່ຖືວ່າເປັນກຳລັງຮັກສາຄວາມປອດໄພ ແລະ ບໍ່ມີສິດປະກອບເຄື່ອງແບບຄືກັນກັບກຳລັງຮັກສາຄວາມປອດໄພ.

**ມາດຕາ 47 ສິດຂອງກຳລັງຮັກສາຄວາມປອດໄພ**

ກຳລັງຮັກສາຄວາມປອດໄພ ມີສິດ ດັ່ງນີ້:

1. ສະກັດກັ້ນທຸກການກະທຳຜິດ ແລະ ເຫດການກໍ່ຄວາມວຸ້ນວາຍຢູ່ບໍລິເວນທີ່ຕົນຮັບຜິດຊອບ.

ໃນກໍລະນີພົບເຫັນການກະທຳຜິດເຊິ່ງໜ້າ ມີສິດກັກຕົວຜູ້ກະທຳຜິດ ແລ້ວແຈ້ງໃຫ້ເຈົ້າໜ້າທີ່ປ້ອງກັນຄວາມສະຫງົບກຸ່ມບ້ານ, ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນເມືອງ ແລະ ຂັ້ນແຂວງ ທີ່ຢູ່ໃກ້ທີ່ສຸດໃນທັນທີ;

2. ໄດ້ຮັບການປະກອບ ເຄື່ອງແບບ, ອາວຸດ ແລະ ວັດຖຸປະກອບຊ່ວຍໜູນອື່ນທີ່ຈຳເປັນເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວປະຕິບັດໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ;

3. ໄດ້ຮັບນະໂຍບາຍອຸດໜູນ ແລະ ນະໂຍບາຍອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ;

4. ໄດ້ຮັບ ການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ຕາມສັນຍາແຮງງານ, ກົດລະບຽບວິສາຫະກິດ ແລະ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ;

5. ໄດ້ຮັບການປົກປ້ອງຕາມກົດໝາຍຈາກການ ຖືກກ່າວຫາ, ຮ້ອງຟ້ອງ, ໃສ່ຮ້າຍປ້າຍສີ, ຂົ່ມຂູ່ ຫຼື ນາບຂູ່ ໃນເວລາເຄື່ອນໄຫວປະຕິບັດໜ້າທີ່ ທີ່ຖືກຕ້ອງຕາມກົດໝາຍ;

6. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 48 ໜ້າທີ່ຂອງກຳລັງຮັກສາຄວາມປອດໄພ**

ກຳລັງຮັກສາຄວາມປອດໄພ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ, ຈັດຕັ້ງປະຕິບັດ ແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການ ຂອງລັດ;

2. ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ຢູ່ສະຖານທີ່ ທີ່ຕົນຮັບຜິດຊອບ;

3. ຊອກຄົ້ນຫາ ສະພາບກົນອຸບາຍ, ເລ່ຫຼ່ຽມ ການເຄື່ອນໄຫວ ຂອງບຸກຄົນ, ກຸ່ມຄົນບໍ່ດີ, ຍົກສູງສະຕິລະວັງຕົວ ໃນການຮັກສາຄວາມປອດໄພ ຂອງຊີວິດ, ສຸຂະພາບ ແລະ ຊັບສິນ ຢູ່ສະຖານທີ່ ທີ່ຕົນຮັບຜິດຊອບ;

4. ສະກັດກັ້ນ ແລະ ແກ້ໄຂ ທຸກການກະທຳຜິດ ຫຼື ເຫດການ ກໍ່ຄວາມບໍ່ສະຫງົບ ຢູ່ສະຖານທີ່ ທີ່ຕົນຮັບຜິດຊອບ;

5. ຈັດຕັ້ງກຳລັງໃນການຮັກສາຄວາມສະຫງົບ, ຄວາມປອດໄພ ຢູ່ສະຖານທີ່ທີ່ຕົນຮັບຜິດຊອບຢ່າງເປັນປົກກະຕິ;

6. ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ;

7. ສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານປ້ອງກັນຄວາມສະຫງົບ ໃຫ້ວິສາຫະກິດ, ສາຍກວດ, ເຈົ້າໜ້າທີ່ຕຳຫຼວດຂັ້ນທ້ອງຖິ່ນ ຢູ່ສະຖານທີ່ ທີ່ຕົນຮັບຜິດຊອບ;

8. ແຈ້ງເຫດ ໄຟໄໝ້ ແລະ ການກໍ່ອາຊະຍາກຳຕ່າງໆ ໃຫ້ ເຈົ້າໜ້າທີ່ຕຳຫຼວດ ແລະ ເຈົ້າຂອງສະຖານທີ່;

9. ປະກອບສ່ວນຊ່ວຍເຈົ້າໜ້າທີ່ຕຳຫຼວດ ຕ້ານ ແລະ ສະກັດກັ້ນ ການກໍ່ອາຊະຍາກຳ ລວມທັງຊ່ວຍເຫຼືອຜູ້ຖືກເຄາະຮ້າຍ, ກູ້ໄພ, ປ້ອງກັນສະຖານທີ່ເກີດເຫດ ຢູ່ ສະຖານທີ່ ທີ່ຕົນຮັບຜິດຊອບ ຫຼື ບໍລິເວນອ້ອມຂ້າງ;

10. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງວິສາຫະກິດຮັກສາຄວາມປອດໄພ ແລະ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 49 ພັນທະຂອງກຳລັງຮັກສາຄວາມປອດໄພ**

ກຳລັງຮັກສາຄວາມປອດໄພ ມີພັນທະ ດັ່ງນີ້:

1. ປະກອບສ່ວນ ເຂົ້າໃນວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເຄົາລົບ ແລະ ປະຕິບັດກົດໝາຍ ແລະ ລະບຽບການອື່ນ ຢ່າງເຂັ້ມງວດ;

2. ປະກອບສ່ວນ ເຂົ້າໃນວຽກງານຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍທາງສັງຄົມ ເປັນຕົ້ນ ງານສຳຄັນຕ່າງໆຂອງຊາດ ຕາມການມອບໝາຍຂອງຂະແໜງການປ້ອງກັນຄວາມສະຫງົບ ໂດຍບໍ່ຮຽກຮ້ອງຜົນຕອບແທນ;

3. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

# ພາກທີ V
# ຂໍ້ຫ້າມ

**ມາດຕາ 50 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ຈ້າງກຳລັງຮັກສາຄວາມປອດໄພ ເພື່ອຈູດປະສົງ ນາບຂູ່, ຂູ່ເຂັນ, ບັງຄັບ, ຂັດຂວາງ ຫຼື ສ້າງສິ່ງກີດກັ້ນ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນບໍ່ຊອບທຳໃຫ້ແກ່ຕົນເອງ;

2. ສວຍໃຊ້ ວິສາຫະກິດ ຫຼື ກຳລັງຮັກສາຄວາມປອດໄພ ເພື່ອບີບບັງຄັບນາບຂູ່ ຫຼື ໃຊ້ກຳລັງ ເພື່ອເຄື່ອນໄຫວຜິດກົດໝາຍ, ລ່ວງລະເມີດ ສິດ ແລະ ຜົນປະໂຫຍດ ອັນຊອບທຳຂອງພົນລະເມືອງ;

3. ຈັດຕັ້ງ ຫຼື ວ່າຈ້າງ ປ້ອງກັນເວນຍາມດ້ວຍຕົນເອງ ໃນຮູບການຂອງວິສາຫະກິດຮັກສາຄວາມປອດໄພ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກະຊວງປ້ອງກັນຄວາມສະຫງົບ ຢ່າງເດັດຂາດ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 51 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ທີ່ຮັບຜິດຊອບວຽກງານວິສາຫະກິດຮັກສາຄວາມປອດໄພ**

ຫ້າມເຈົ້າໜ້າທີ່ ຮັບຜິດຊອບວຽກງານວິສາຫະກິດຮັກສາຄວາມປອດໄພ ມີພຶດຕິກຳ ດັ່ງນີ້:

1. ກົດໜ່ວງ ການຂໍໃບອະນຸຍາດດຳເນີນທຸລະກິດ, ສ້າງຕັ້ງສາຂາ, ສ້າງຕັ້ງສູນຝຶກອົບຮົມ ຫຼື ໃບອະນຸຍາດຜ່ານຫຼັກສູດຝຶກອົບຮົມ, ໃບອະນຸຍາດເປັນກຳລັງຮັກສາຄວາມປອດໄພ, ການຕໍ່ອາຍຸໃບດຳເນີນທຸລະກິດ, ສ້າງຕັ້ງສາຂາ ແລະ ກຳລັງຮັກສາຄວາມປອດໄພ ໂດຍບໍ່ມີເຫດຜົນ ແລະ ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

2. ອອກໃບອະນຸຍາດດຳເນີນທຸລະກິດ, ສ້າງຕັ້ງສູນຝຶກອົບຮົມ ຫຼື ໃບອະນຸຍາດຜ່ານຫຼັກສູດຝຶກອົບຮົມ, ໃບອະນຸຍາດເປັນກຳລັງຮັກສາຄວາມປອດໄພ ຂອງວິສາຫະກິດ ຫຼື ສ້າງຕັ້ງສາຂາ, ສ້າງຕັ້ງສູນຝຶກອົບຮົມ ຫຼື ໃບອະນຸຍາດຜ່ານຫຼັກສູດຝຶກອົບຮົມ ໂດຍບໍ່ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການ;

3. ຕໍ່ກຳນົດອາຍຸ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ, ສ້າງຕັ້ງສູນຝຶກອົບຮົມ ຫຼື ໃບອະນຸຍາດຜ່ານຫຼັກສູດຝຶກອົບຮົມ,ໃບອະນຸຍາດເປັນກຳລັງຮັກສາຄວາມປອດໄພ ຂອງວິສາຫະກິດ ຫຼື ສ້າງຕັ້ງສາຂາ ໂດຍບໍ່ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການ;

4. ສວຍໃຊ້ສິດ ແລະ ໜ້າທີ່ຂອງຕົນ ເພື່ອຮຽກຮ້ອງຜົນປະໂຫຍດ ຫຼື ຮັບສິນບົນ ແລະ ອຳນວຍຄວາມສະດວກ ໃນການອະນຸຍາດດຳເນີນທຸລະກິດ, ສ້າງຕັ້ງສູນຝຶກອົບຮົມ ຫຼື ໃບອະນຸຍາດຜ່ານຫຼັກສູດຝຶກອົບຮົມ, ໃບອະນຸຍາດເປັນກຳລັງຮັກສາຄວາມປອດໄພ ຂອງວິສາຫະກິດ ຫຼື ສ້າງຕັ້ງສາຂາ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

### ມາດຕາ 52 ຂໍ້ຫ້າມສຳລັບວິສາຫະກິດຮັກສາຄວາມປອດໄພ

ຫ້າມວິສາຫະກິດຮັກສາຄວາມປອດໄພ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດຮັກສາຄວາມປອດໄພ ໂດຍບໍ່ໄດ້ຂຶ້ນທະບຽນສ້າງຕັ້ງວິສາຫະກິດ, ໃບອະນຸຍາດລົງທຶນ, ໃບອະນຸຍາດດຳເນີນທຸລະກິດ ຕາມທີ່ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ;

2. ສືບຕໍ່ດຳເນີນທຸລະກິດຮັກສາຄວາມປອດໄພ ໃນເມື່ອມີ ຄຳສັ່ງໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດຮັກສາຄວາມປອດໄພແລ້ວ;

3. ເຄື່ອນໄຫວດຳເນີນທຸລະກິດ ບໍ່ຖືກຕາມວັດຖຸປະສົງ ທີ່ກຳນົດໄວ້ໃນໃບອະນຸຍາດ ດຳເນີນທຸລະກິດຮັກສາຄວາມປອດໄພ;

4. ໃຫ້ບຸກຄົນ, ນິຕິບຸກຄົນອື່ນ ຢືມ ຫຼື ເຊົ່າ ທະບຽນວິສາຫະກິດຮັກສາຄວາມປອດໄພ, ໃບອະນຸຍາດລົງທຶນ ແລະ ໃບອະນຸຍາດດຳເນີນທຸລະກິດຮັກສາຄວາມປອດໄພ;

5. ສວຍໃຊ້ພາລະບົດບາດຂອງຕົນ, ສົມຮູ້ຮ່ວມຄິດ ກັບ ລູກຄ້າ ໃນການເຄື່ອນໄຫວຮັກສາຄວາມປອດໄພ ຕໍ່ບັນດາເປົ້າໝາຍ, ສະຖານທີ່ ທີ່ເຄື່ອນໄຫວໂດຍບໍ່ຖືກຕ້ອງຕາມກົດໝາຍ ເປັນຕົ້ນ ການດຳເນີນທຸລະກິດຜິດກົດໝາຍ, ປົກປັກຮັກສາ ວັດຖຸ, ຊັບສິນ ຂອງລູກຄ້າ ທີ່ຜິດກົດໝາຍ;

6. ເມີນເສີຍ ຫຼື ສົມຮູ້ຮ່ວມຄິດ ຕໍ່ການກະທຳຜິດ ຂອງລູກຄ້າ ທີ່ເປັນການກະທຳຜິດກົດໝາຍຢ່າງຈະແຈ້ງ;

7. ນຳໃຊ້ກຳລັງຮັກສາຄວາມປອດໄພ ໂດຍບໍ່ໄດ້ຜ່ານການຝຶກອົບຮົມ ແລະ ບໍ່ມີໃບອະນຸຍາດ ເປັນກຳລັງຮັກສາຄວາມປອດໄພ;

8. ປະກອບອາວຸດ ແລະ ວັດຖຸປະກອບຊ່ວຍໜູນ ໃຫ້ກຳລັງຮັກສາຄວາມປອດໄພ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

9. ແຂ່ງຂັນລາຄາ ກັບ ບັນດາວິສາຫະກິດຮັກສາຄວາມປອດໄພອື່ນ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

10. ສວຍໃຊ້ ອາວຸດ ຫຼື ກຳລັງຮັກສາຄວາມປອດໄພ ເພື່ອນາບຂູ່, ບັງຄັບ, ສ້າງຄວາມຫຍຸ້ງຍາກ ຫຼື ລ່ວງລະເມີດ ສິດ ແລະ ຜົນປະໂຫຍດ ອັນຊອບທຳຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

11. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

### ມາດຕາ 53 ຂໍ້ຫ້າມສຳລັບກຳລັງຮັກສາຄວາມປອດໄພ

ຫ້າມກຳລັງຮັກສາຄວາມປອດໄພ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ສິດ, ໜ້າທີ່ ເພື່ອ ນາບຂູ່, ບັງຄັບ, ສ້າງຄວາມຫຍຸ້ງຍາກ ຫຼື ລ່ວງລະເມີດ ສິດ ແລະ ຜົນປະໂຫຍດອັນຊອບທຳຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

2. ຮັບໜ້າທີ່ ຮັກສາຄວາມປອດໄພ ໂດຍບໍ່ທັນໄດ້ຮັບອະນຸຍາດເປັນກຳລັງຮັກສາຄວາມປອດໄພ;

3. ສືບຕໍ່ເຮັດໜ້າທີ່ ໃນເມື່ອມີຄຳສັ່ງຖອນໃບອະນຸຍາດ ເປັນກຳລັງຮັກສາຄວາມປອດໄພ;

4. ປະຕິບັດໜ້າທີ່ ເກີນຂອບເຂດຕາມການມອບໝາຍ ແລະ ຄວາມຮັບຜິດຊອບຕາມສັນຍາວ່າຈ້າງ ຂອງລູກຄ້າ;

5. ສົມຮູ້ຮ່ວມຄິດ ກັບບຸກຄົນ ພາຍນອກ ຫຼື ພາຍໃນ ເພື່ອອຳນວຍຄວາມສະດວກ ໃຫ້ບຸກຄົນອື່ນ ມາກໍ່ອາດຊະຍາກຳຢູ່ສະຖານທີ່ ທີ່ຕົນຮັບຜິດຊອບ;

6. ປະລະໜ້າທີ່ໃນເວລາເວນຍາມ, ເມີນເສີຍ ແລະ ເລີ່ນເລີ້ ໃນການປະຕິບັດໜ້າທີ່;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

# ພາກທີ VI
# ການຄຸ້ມຄອງ ແລະ ການກວດກາ
# ວຽກງານວິສາຫະກິດຮັກສາຄວາມປອດໄພ

## ໝວດທີ 1
## ການຄຸ້ມຄອງວຽກງານວິສາຫະກິດຮັກສາຄວາມປອດໄພ

### ມາດຕາ 54 ອົງການຄຸ້ມຄອງວຽກງານວິສາຫະກິດຮັກສາຄວາມປອດໄພ

ລັດຖະບານເປັນຜູ້ຄຸ້ມຄອງວຽກງານຮັກສາຄວາມປອດໄພ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງປ້ອງກັນຄວາມສະຫງົບ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບບັນດາກະຊວງ, ອົງການ, ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ.

ອົງການຄຸ້ມຄອງວຽກງານວິສາຫະກິດຮັກສາຄວາມປອດໄພ ປະກອບດ້ວຍ:

1. ຂັ້ນກະຊວງ ມອບໃຫ້ ກົມໃຫຍ່ພະລາທິການ ກະຊວງປ້ອງກັນຄວາມສະຫງົບ;
2. ຂັ້ນແຂວງ ມອບໃຫ້ ຫ້ອງພະລາທິການ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ.

### ມາດຕາ 55 ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງວຽກງານວິສາຫະກິດຮັກສາຄວາມປອດໄພ ຂັ້ນກະຊວງ

ອົງການຄຸ້ມຄອງວຽກງານວິສາຫະກິດຮັກສາຄວາມປອດໄພ ຂັ້ນກະຊວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານວິສາຫະກິດຮັກສາຄວາມປອດໄພ;

2. ຄຸ້ມຄອງ, ຕິດຕາມ ກວດກາ ການເຄື່ອນໄຫວວຽກງານວິສາຫະກິດຮັກສາຄວາມປອດໄພ ໃນຂອບເຂດທົ່ວປະເທດ;

3. ປັບໃໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດ ກົດໝາຍ ແລະ ລະບຽບການ;

4. ຄົ້ນຄວ້າ ສຳນວນຄຳຮ້ອງຂໍອະນຸຍາດ ການລົງທຶນ ແລະ ດຳເນີນທຸລະກິດ, ສ້າງຕັ້ງສາຂາ, ສ້າງຕັ້ງສູນ ຫຼື ຜ່ານຫຼັກສູດຝຶກອົບຮົມ, ຕໍ່ອາຍຸ, ໂຈະ, ຖອນ ວິສາຫະກິດ ແລະ ກຳລັງຮັກສາຄວາມປອດໄພ ເພື່ອນຳສະເໜີຕໍ່ລັດຖະມົນຕີ ພິຈາລະນາ ອະນຸມັດ ແລະ ຮັບຮອງເອົາ;

5. ເປັນເຈົ້າການໃນການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ຊຸກຍູ້ ການເຄື່ອນໄຫວດຳເນີນທຸລະກິດ ແລະ ການຈັດຕັ້ງປະຕິບັດໜ້າທີ່ ຂອງກຳລັງຮັກສາຄວາມປອດໄພ ໃນຂອບເຂດທົ່ວປະເທດ ໂດຍປະສານສົມທົບກັບ ຂະແໜງການ ແລະ ທ້ອງຖິ່ນ;

6. ສະຫຼຸບສັງລວມ, ຕີລາຄາປະເມີນຜົນ ຂອງການເຄື່ອນໄຫວ ດຳເນີນທຸລະກິດ ແລະ ການປະຕິບັດໜ້າທີ່ ຂອງກຳລັງຮັກສາຄວາມປອດໄພ;

7. ຄົ້ນຄວ້າ ປັບປຸງ ຫົວໜ່ວຍທຸລະກິດ ແລະ ພັດທະນາກຳລັງຮັກສາຄວາມປອດໄພ ໃຫ້ທັນສະໄໝ, ມີຄວາມໜັກແໜ້ນທາງດ້ານການເມືອງແນວຄິດ ແລະ ເຂັ້ມແຂງທາງດ້ານວິຊາສະເພາະ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 56 ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງວຽກງານວິສາຫະກິດຮັກສາຄວາມປອດໄພ ຂັ້ນແຂວງ**

ອົງການຄຸ້ມຄອງວຽກງານວິສາຫະກິດຮັກສາຄວາມປອດໄພ ຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສຳນວນຄຳຮ້ອງຂໍອະນຸຍາດ ລົງທຶນ ແລະ ດຳເນີນທຸລະກິດ, ສ້າງຕັ້ງສາຂາ, ສ້າງຕັ້ງສູນ ຫຼື ຜ່ານຫຼັກສູດຝຶກອົບຮົມ, ຕໍ່ອາຍຸ, ໂຈະ, ຖອນ, ຍຸບເລີກ ວິສາຫະກິດ ແລະ ກຳລັງຮັກສາຄວາມປອດໄພ ເພື່ອນຳສະເໜີ ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ ພິຈາລະນາ ສະເໜີຕໍ່ ກະຊວງປ້ອງກັນຄວາມສະຫງົບ ອະນຸມັດຕົກລົງ;

2. ເປັນເຈົ້າການໃນການຕິດຕາມ, ຄຸ້ມຄອງ, ສະຫຼຸບສັງລວມ, ຕີລາຄາປະເມີນຜົນ ແລະ ລາຍງານຜົນການເຄື່ອນໄຫວດຳເນີນທຸລະກິດ ແລະ ການຈັດຕັ້ງປະຕິບັດໜ້າທີ່ ຂອງກຳລັງຮັກສາຄວາມປອດໄພ ພາຍໃນທ້ອງຖິ່ນຂອງຕົນຮັບຜິດຊອບ ໃຫ້ກະຊວງປ້ອງກັນຄວາມສະຫງົບ;

3. ປັບໃໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດ ກົດໝາຍ ແລະ ລະບຽບການ ຢູ່ໃນຂອບເຂດ ຄວາມຮັບຜິດຊອບຂອງຕົນ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 57 ການຕິດຕາມ ແລະ ປະເມີນຜົນ**

ມອບໃຫ້ ອົງການຄຸ້ມຄອງວຽກງານວິສາຫະກິດຮັກສາຄວາມປອດໄພ ຂັ້ນກະຊວງ ສົມທົບກັບອົງການຄຸ້ມຄອງວຽກງານວິສາຫະກິດຮັກສາຄວາມປອດໄພ ຂັ້ນແຂວງ ເປັນເຈົ້າການ ຕິດຕາມ, ປະເມີນຜົນ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານການບໍລິການ ແລະ ເຮັດໜ້າທີ່ຮັກສາຄວາມປອດໄພໃຫ້ມີປະສິດທິຜົນ ສອດຄ່ອງກັບ ກົດໝາຍ ແລະ ລະບຽບການ.

ທຸກໆປີ ຕ້ອງມີການຈັດກອງປະຊຸມສະຫຼຸບຖອດຖອນບົດຮຽນປະຈຳປີ ໂດຍກຳນົດເອົາທ້າຍເດືອນ ມັງກອນ ຂອງແຕ່ລະປີ ແລະ ທຸກສາມປີ ຕ້ອງມີການປະເມີນຜົນ ແລະ ຈັດກອງປະຊຸມສະຫຼຸບຖອດຖອນບົດຮຽນໜຶ່ງຄັ້ງ.

## ໝວດທີ 2
## ການກວດກາ

**ມາດຕາ 58 ອົງການກວດກາ**

ອົງການກວດກາວຽກງານວິສາຫະກິດຮັກສາຄວາມປອດໄພ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງ ແມ່ນອົງການດຽວກັນກັບອົງການຄຸ້ມຄອງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 54 ຂອງດຳລັດສະບັບນີ້.

2. ອົງການກວດກາພາຍນອກ ຊຶ່ງ ແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດຖະບານ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ປະຊາຊົນ ແລະ ສື່ມວນຊົນ.

**ມາດຕາ 59 ເນື້ອໃນກວດກາ**

ການກວດກາວຽກງານວິສາຫະກິດຮັກສາຄວາມປອດໄພ ມີ ເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດໜ້າທີ່ ປະກອບສ່ວນເຂົ້າໃນວຽກງານຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ທາງສັງຄົມ;
2. ການຈັດຕັ້ງປະຕິບັດ ຫຼັກການ, ມາດຖານ, ເງື່ອນໄຂ, ການປະຕິບັດໜ້າທີ່ ແລະ ຂອບເຂດສິດ, ພັນທະ, ຂໍ້ຫ້າມ ແລະ ການດຳເນີນທຸລະກິດ ຂອງວິສາຫະກິດຮັກສາຄວາມປອດໄພ;
3. ການປະຕິບັດນະໂຍບາຍ ແລະ ການນຳໃຊ້ມາດຕະການ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ;
4. ບັນຫາອື່ນ ທີ່ພົວພັນເຖິງວຽກງານຄຸ້ມຄອງ, ຕິດຕາມ, ກວດກາ ວິສາຫະກິດຮັກສາຄວາມປອດໄພ ແລະ ກຳລັງຮັກສາຄວາມປອດໄພ ທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 60 ຮູບການກວດກາ**

ການກວດກາ ວຽກງານວິສາຫະກິດຮັກສາຄວາມປອດໄພ ມີ ສາມຮູບການ ດັ່ງນີ້:

1. ການກວດກາປົກກະຕິ;
2. ການກວດກາໂດຍມີການແຈ້ງການໃຫ້ຮູ້ລ່ວງໜ້າ;
3. ການກວດກາ ແບບກະທັນຫັນ.

ການກວດກາປົກກະຕິ ແມ່ນການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ ຜູ້ຖືກກວດກາຮູ້ລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນການກວດກາໃນເວລາທີ່ຈຳເປັນ ແລະ ຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

## ພາກທີ VII
## ການປະກອບເຄື່ອງແບບ, ເຄື່ອງໝາຍ ແລະ ຕາປະທັບ ຂອງວິສາຫະກິດຮັກສາຄວາມປອດໄພ

**ມາດຕາ 61 ການປະກອບເຄື່ອງແບບໃຫ້ກຳລັງຮັກສາຄວາມປອດໄພ**

ກຳລັງຮັກສາຄວາມປອດໄພຜູ້ໜຶ່ງ ປະກອບມີຊຸດເຄື່ອງແບບ ດັ່ງນີ້:

1. ໝວກ ໜຶ່ງໜ່ວຍ ຕໍ່ ສາມປີ;
2. ເຄື່ອງແບບຕາມລະດູການ (ຊຸດແຂນຍາວ ແລະ ແຂນສັ້ນ) ໜຶ່ງຊຸດ ຕໍ່ ໜຶ່ງປີ;
3. ເຄື່ອງແບບ ຊຸດໃຫຍ່ ລະດູໜາວ ໜຶ່ງຊຸດ ຕໍ່ ສອງປີ;

4. ເສື້ອຊ້ອນໃນ ສອງໂຕ ຕໍ່ ໜຶ່ງປີ;
5. ຖົງມື ໜຶ່ງຄູ່ ຕໍ່ ໜຶ່ງປີ;
6. ກາລະວັດ ໜຶ່ງອັນ ຕໍ່ ສອງປີ;
7. ສາຍແອວ ໜຶ່ງເສັ້ນ ຕໍ່ ສາມປີ;
8. ຖົງຕີນ ສອງຄູ່ ຕໍ່ ໜຶ່ງປີ;
9. ເກີບໜັງສີດຳ ໜຶ່ງຄູ່ ຕໍ່ ສອງປີ;
10. ເສື້ອກັນຝົນ ໜຶ່ງຊຸດ ຕໍ່ ສາມປີ;

**ມາດຕາ 62 ເຄື່ອງໝາຍ ວິສາຫະກິດ ແລະ ກຳລັງຮັກສາຄວາມປອດໄພ**

ວິສາຫະກິດຮັກສາຄວາມປອດໄພ ແລະ ກຳລັງຮັກສາຄວາມປອດໄພ ມີເຄື່ອງໝາຍ ແລະ ກາໝາຍ ສະເພາະຂອງຕົນ ສ່ວນກາໝາຍ, ໝວກ, ຊັ້ນ ແມ່ນຄືກັນ ຊຶ່ງຕ້ອງໄດ້ຮັບອະນຸຍາດ ແລະ ຕົກລົງເຫັນດີ ຈາກກະຊວງປ້ອງກັນຄວາມສະຫງົບ.

ສຳລັບ ການອອກແບບເຄື່ອງໝາຍ, ກາໝາຍໝວກ ຂອງວິສາຫະກິດ ແລະ ກຳລັງຮັກສາຄວາມປອດໄພນັ້ນ ໃຫ້ມີລັກສະນະຄ້າຍຄືກັບເຄື່ອງໝາຍ, ກາໝາຍ ຂອງກຳລັງປ້ອງກັນປະເທດ ແລະ ກຳລັງປ້ອງກັນຄວາມສະຫງົບ.

**ມາດຕາ 63 ອຸປະກອນຊ່ວຍໜູນກຳລັງຮັກສາຄວາມປອດໄພ**

ການປະກອບອຸປະກອນຊ່ວຍໜູນ ໃຫ້ແກ່ກຳລັງຮັກສາຄວາມປອດໄພ ຮັບໃຊ້ເຂົ້າໃນການເຄື່ອນໄຫວປະຕິບັດໜ້າທີ່ຂອງຕົນ ປະກອບມີ:

1. ໄມ້ຄ້ອນ;
2. ກະແຈມື;
3. ໄຟສາຍ;
4. ໜາກຫວີດ;
5. ວິທະຍຸສື່ສານ;
6. ປືນໄຟຟ້າ (ເປົ້າໝາຍຮັກສາຄວາມປອດໄພທີ່ສຳຄັນ);
7. ເຄື່ອງກວດທາດແຕກ ມືຖື (ເປົ້າໝາຍຮັກສາຄວາມປອດໄພທີ່ ສຳຄັນ);
8. ອາວຸດ ປະເພດ ປືນສັ້ນ ຫຼື ປືນເຫຼັກຍາວ (ປະກອບສະເພາະ ລັດວິສະຫະກິດ ຫຼື ຮຸ້ນສ່ວນກຳລັງຮັກສາຄວາມປອດໄພ ທີ່ອະນຸຍາດ ໃຫ້ດຳເນີນທຸລະກິດຮັກສາຄວາມປອດໄພ ໃຫ້ບຸກຄົນສຳຄັນ, ສະຖານທີ່ຊັບສິນມີຄ່າ, ທະນາຄານ, ຫົວໜ່ວຍທຸລະກິດ ຂາຍວັດຖຸມີຄ່າ, ການຂົນສົ່ງເງິນຕາ ແລະ ວັດຖຸມີຄ່າ ແລະ ສະຖານທີ່ສຳຄັນ ເຊັ່ນ ພິພິທະພັນ);
9. ເສື້ອກັນກະສຸນ ສຳລັບຜູ້ເຮັດໜ້າທີ່ປ້ອງກັນໃນການຂົນສົ່ງ ເງິນຕາ ຫຼື ວັດຖຸມີຄ່າ ໜຶ່ງໂຕ.

ສຳລັບ ການປະກອບອາວຸດ ໃຫ້ ວິສາຫະກິດ ແລະ ກຳລັງ ຮັກສາຄວາມປອດໄພ ຕ້ອງໄດ້ຮັບການຕົກລົງເຫັນດີ ຈາກກະຊວງປ້ອງກັນຄວາມສະຫງົບ.

**ມາດຕາ 64 ການຂໍອະນຸຍາດໃນການນຳໃຊ້ເຄື່ອງແບບ ຂອງກຳລັງຮັກສາຄວາມປອດໄພ ແລະ ເຄື່ອງໝາຍວິສາຫະກິດ**

ໃນການຂໍອະນຸຍາດດຳເນີນທຸລະກິດຮັກສາຄວາມປອດໄພ ຜູ້ສະເໜີ ຕ້ອງປະກອບສຳນວນເອກະສານ ຂໍອະນຸຍາດນຳໃຊ້ເຄື່ອງແບບ, ເຄື່ອງໝາຍ ໄປພ້ອມກັບການປະກອບເອກະສານ ຂໍອະນຸຍາດດຳເນີນທຸລະກິດຮັກສາຄວາມປອດໄພ. ສຳນວນເອກະສານປະກອບຂໍອະນຸຍາດນຳໃຊ້ເຄື່ອງແບບ ແລະ ເຄື່ອງໝາຍ ຕ້ອງມີຮູບແບບຂອງເຄື່ອງແບບ ຊຶ່ງກຳນົດເບີສີເຄື່ອງແບບ ພ້ອມທັງຮູບແບບເຄື່ອງໝາຍ ຍື່ນຕໍ່ອົງການຄຸ້ມຄອງວິສາຫະກິດຮັກສາຄວາມປອດໄພ ຂັ້ນແຂວງ ເພື່ອຄົ້ນຄວ້າ, ພາຍຫຼັງຮັບຮອງແລ້ວ ຈຶ່ງນຳສະເໜີອົງການຄຸ້ມຄອງວິສາຫະກິດຮັກສາຄວາມປອດໄພ ຂັ້ນກະຊວງ ເປັນຜູ້ພິຈາລະນາຕົກລົງອະນຸມັດ.

ເຄື່ອງແບບ ແລະ ເຄື່ອງໝາຍ ອາດຈະຄ້າຍຄືກັນ ແຕ່ຈະຕ່າງສີ ແລະ ຊື່ວິສາຫະກິດ ຂຶ້ນກັບການອອກແບບ ແຕ່ລະວິສາຫະກິດຮັກສາຄວາມປອດໄພ.

**ມາດຕາ 65 ຜູ້ອະນຸຍາດ ນຳໃຊ້ເຄື່ອງແບບ ແລະ ເຄື່ອງໝາຍ ຂອງກຳລັງຮັກສາຄວາມປອດໄພ**

ລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ມີສິດອອກໃບອະນຸຍາດ ນຳໃຊ້ເຄື່ອງແບບ ແລະ ເຄື່ອງໝາຍວິສະຫະກິດຮັກສາຄວາມປອດໄພ.

**ມາດຕາ 66 ຕາປະທັບວິສາຫະກິດຮັກສາຄວາມປອດໄພ**

ໃນການເຄື່ອນໄຫວວຽກງານວິສາຫະກິດຮັກສາຄວາມປອດໄພ ວິສາຫະກິດ ແລະ ສາຂາວິສາຫະກິດ ຮັກສາຄວາມປອດໄພ ມີຕາປະທັບສະເພາະຂອງຕົນ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 67 ນະໂຍບາຍຕໍ່ຜູ້ມີຜົນງານ**

ວິສາຫະກິດຮັກສາຄວາມປອດໄພ ທີ່ມີຜົນງານດີເດັ່ນ ໃນການປະຕິບັດ ກົດໝາຍ ແລະ ລະບຽບການກ່ຽວກັບ ການປ້ອງກັນຄວາມສະຫງົບ ທາງດ້ານການເມືອງ, ທາງດ້ານ ເສດຖະກິດ ແລະ ສັງຄົມ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍ ຕາມລະບຽບການ.

ສຳລັບ ກຳລັງຮັກສາຄວາມປອດໄພ ຜູ້ທີ່ມີຜົນງານດີເດັ່ນ ໃນການປະຕິບັດໜ້າທີ່ ຕ້ານອາຊະຍາກຳຢ່າງກ້າຫານ ຈະໄດ້ຮັບບຳເນັດລາງວັນຢ່າງເໝາະສົມ, ຈະໄດ້ຮັບການຍ້ອງຍໍ ຕາມລະບຽບການ. ຖ້າຫາກມີມາດຕະຖານເງື່ອນໄຂຄົບຖ້ວນ ອາດຈະພິຈາລະນາຮັບເຂົ້າເປັນກຳລັງອາຊີບ ຕາມທີ່ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການຂອງກຳລັງປ້ອງກັນຄວາມສະຫງົບ.

**ມາດຕາ 68 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງໃດ ຫາກລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

**ມາດຕາ 69 ມາດຕະການທາງວິໄນ**

ເຈົ້າໜ້າທີ່ ທີ່ຮັບຜິດຊອບວຽກງານວິສາຫະກິດຮັກສາຄວາມປອດໄພ ແລະ ກໍາລັງຮັກສາຄວາມປອດໄພ ທີ່ລະເມີດດໍາລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ໄດ້ກໍານົດໄວ້ໃນມາດຕາ 51 ແລະ 53 ຂອງດໍາລັດສະບັບນີ້ ທີ່ມີລັກສະນະເບົາ ຊຶ່ງບໍ່ເປັນການກະທໍາຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍບໍ່ຫຼວງຫຼາຍ ແຕ່ບໍ່ມີຄວາມຈິງໃຈລາຍງານ, ຫຼົບຫຼີກຈາກການກະທໍາຜິດຂອງຕົນ ຈະຖືກລົງວິໄນ ຕາມລະບຽບການ.

**ມາດຕາ 70 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫາກໄດ້ລະເມີດດໍາລັດສະບັບນີ້ ຊຶ່ງບໍ່ເປັນການກະທໍາຜິດທາງອາຍາ ຈະຖືກປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:

1. ຈັດຕັ້ງ ຫຼື ວ່າຈ້າງ ປ້ອງກັນເວນຍາມດ້ວຍຕົນເອງໃນທຸລະກິດ ຂອງວິສາຫະກິດຮັກສາຄວາມປອດໄພ ໂດຍບໍ່ໄດ້ຮັບອະນຸຍາດຈາກກະຊວງປ້ອງກັນຄວາມສະຫງົບ ຈະຖືກສຶກສາອົບຮົມ ກ່າວເຕືອນ ແລະ ປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ;

2. ດໍາເນີນທຸລະກິດຮັກສາຄວາມປອດໄພ ໂດຍບໍ່ໄດ້ຮັບການອະນຸຍາດ ຈາກກະຊວງປ້ອງກັນຄວາມສະຫງົບ ຈະຕ້ອງຖືກ ປັບໃໝ ແຕ່ 10.000.000 ກີບ ຫາ 70.000.000 ກີບ;

3. ດໍາເນີນທຸລະກິດຮັກສາຄວາມປອດໄພ ຫາກບໍ່ຖືກກັບວັດຖຸປະສົງ ຈະໄດ້ຖືກສຶກສາອົບຮົມ ກ່າວເຕືອນ ແລະ ປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ;

4. ຢືມ, ເຊົ່າ ແລະ ຜູ້ໃຫ້ເຊົ່າ ທະບຽນສ້າງຕັ້ງວິສາຫະກິດ, ໃບອະນຸຍາດລົງທຶນ ແລະ ໃບອະນຸຍາດດໍາເນີນທຸລະກິດຮັກສາຄວາມປອດໄພ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ ແລະ ຖອນໃບອະນຸຍາດດໍາເນີນທຸລະກິດ.

**ມາດຕາ 71 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດດໍາລັດສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງ ລັດ, ສັງຄົມ ຫຼື ບຸກຄົນອື່ນ ຕ້ອງໃຊ້ແທນຄ່າເສຍຫາຍທີ່ຕົນກໍ່ຂຶ້ນ.

**ມາດຕາ 72 ມາດຕະການທາງອາຍາ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດດໍາລັດສະບັບນີ້ ຊຶ່ງເປັນການກະທໍາຜິດທາງອາຍາ ຈະຖືກດໍາເນີນຄະດີອາຍາ ຕາມທີ່ໄດ້ກໍານົດໄວ້ໃນປະມວນກົດໝາຍອາຍາ ແລະ ກົດໝາຍອື່ນທີ່ກໍານົດໂທດທາງອາຍາ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 73 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງປ້ອງກັນຄວາມສະຫງົບ ເປັນເຈົ້າການ ແລະ ປະສານສົມທົບ ກັບຂະແໜງການທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຕາມດໍາລັດສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງຂັ້ນທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ໃນການປະຕິບັດຕາມດຳລັດສະບັບນີ້ ຕາມພາລະບົດບາດຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 74 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫຼັງໄດ້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.
ຂໍ້ຕົກລົງ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ທອງລຸນ **ສີສຸລິດ**